| **Deviation**<br>*n.* | DEV | ການປ່ຽນແປງຂື້ນລົງ | A child support amount that differs from the standard calculation according to the Washington State Child Support Schedule. **Laotian –** ຈຳນວນເງິນລ້ຽງລູກທີ່ແຕກຕ່າງຈາກການຄິດໄລ່ມາຕຖານໂດຍອີງຕາມຕາຕລາງເງິນລ້ຽງລູກຂອງຣັດວໍຊິງຕັນ. |
| **Direct Deposit**<br>*n.* | | ການຝາກເງິນເຂົ້າໂດຍກົງ | The act of electronically transferring money from DCS into a custodial parent's bank account. **Laotian –** ການກະທຳຂອງການໂອນເງິນທາງເອເລກໂຕຣນິກຈາກພະແນກ **DCS** ເຂົ້າໄປໃສ່ບັນຊີທະນາຄານຂອງພໍ່ແມ່ຜູ້ມີຄວາມຄຸ້ມຄອງ. |
| **Disposable Earnings**<br>*n.* | | ເງິນຣາຍໄດ້ເຮັດວຽກ<br>ເອົາທີ່ໃຊ້ຈ່າຍໄດ້ | The amount of earnings after deductions are withheld, like Social Security, Medicare, medical insurance and others. Also called net earnings or take-home pay. **Laotian –** ຈຳນວນຂອງເງິນຣາຍໄດ້ທີ່ເຮັດວຽກເອົາຫລັງຈາກເງິນຫັກອອກໄດ້ຖືກກັກເອົາໄວ້ແລ້ວ, ເຊັ່ນວ່າພາສີໂຊໂຊ, ເມດິແຄຣ໌, ປະກັນພັຍພະຍາບານ ແລະ ອື່ນໆ. ຍັງຖືກເອີ້ນອີກຄືກັນວ່າຍອດຣາຍໄດ້ທີ່ເຮັດວຽກເອົາ<br>ຫລື ເງິນຈ່າຍເອົາມາເຮືອນ. |
| **Distribute, Distributor, Distribution**<br>*n.* | DISTR | ແຈກຢາຍ, ຜູ້ແຈກຢາຍ,<br>ການແຈກຢາຍ | The DCS Cash process that applies payments to cases. **Laotian –** ການດຳເນີນການ **DCS Cash** ຊຶ່ງເອົາເງິນຈ່າຍມາເຂົ້າໃສ່ສຳນວນເອກສານ. |
| **Division of Children & Family Services**<br>*n.* | DCFS | ພະແນກບໍຣິການເດັກນ້ອຍ<br>ແລະ ຄອບຄົວ | A program within DSHS that administers programs for children in foster care and those being adopted. **Laotian –** ໂຄງການຢູ່ພາຍໃນກົມ **DSHS** ທີ່ຄວບຄຸມບໍຣິຫານໂຄງການສຳລັບເດັກນ້ອຍຢູ່<br>ໃນການເບິ່ງແຍງດູແລເດັກກຳພ້າ ແລະ ຜູ້ທີ່ກຳລັງຖືກເອົາໄປເປັນລູກລ້ຽງ. |
| **Division of Child Support**<br>*n.* | DCS | ພະແນກເກັບເງິນລ້ຽງລູກ | A program within DSHS that collects child support and processes payments. DCS also enforces medical support and daycare costs. **Laotian –** ໂຄງການຢູ່ພາຍໃນກົມ **DSHS** ທີ່ເກັບເອົາເງິນລ້ຽງລູກ ແລະ ດຳເນີນການໃນເງິນນັ້ນ. ພະແນກ **DCS** ຍັງບັງຄັບໃຫ້ມີການອູ້ມຊູດ້ານພະຍາບານ ແລະ ຄ່າຝາກລູກອີກ. |
| **Division of Developmental Disabilities**<br>*n.* | DDD | ພະແນກກ່ຽວກັບຄວາມ<br>ເສັຽອົງຄະດ້ານການຈະ<br>ເຣີນເຕີບໂຕ | A program within DSHS that administers programs to help disabled persons. **Laotian –** ໂຄງການຢູ່ພາຍໃນກົມ **DSHS** ທີ່ຄວບຄຸມບໍຣິຫານໂຄງການເພື່ອຊ່ວຍເຫລືອຄົນເສັຽອົງຄະ. |

## Division of Child Support

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Division of Fraud Investigation** *n.* | DFI | ພະແນກສືບສວນການສໍ້ໂກງ | The DSHS division that investigates public assistance fraud. **Laotian –** ພະແນກນຶ່ງຂອງກົມ **DSHS** ທີ່ສືບສວນການສໍ້ໂກງການຊ່ວຍເຫລືອຂອງສາທາຣະນະ. |
| **Division of Vocational Rehabilitation** *n.* | DVR | ພະແນກການດັດສ້າງຊາວຫນຸ່ມໃຫ້ດີຄືນຄືເກົ່າ | A program within DSHS that administers programs to help people return to work after an injury or illness. **Laotian –** ຫ້ອງການຢູ່ພາຍໃນກົມ **DSHS** ທີ່ຄວບຄຸມບໍຣິຫານໂຄງການເພື່ອຈະຊ່ວຍເຫລືອບຸກຄົນໃຫ້ກັບຄືນໄປເຮັດວຽກຫລັງຈາກການບາດເຈັບ ຫລື ການເຈັບປ່ວຍ. |
| **Divorce** *n.* | DIV | ການຢ່າຮ້າງ | The legal dissolution of a marriage. **Laotian –** ການເລີກລົ້ມຂອງການແຕ່ງງານຕາມກົດຫມາຍ. |
| **Dollars, Money** *n.* | $ | ເງິນດອນລາ, ເງິນ | Currency used as a medium of exchange. **Laotian –** ເງິນຕຣາທີ່ຖືກໃຊ້ເປັນແນວທາງຂອງການແລກປ່ຽນ. |
| **Donor** *n.* | | ຜູ້ບໍຣິຈາກ | A person who produces eggs or sperm used for reproduction. **Laotian –** ບຸກຄົນຜູ້ທີ່ຜລິດໄຂ່ ຫລື ນ້ຳເຊື້ອທີ່ຖືກໃຊ້ສຳລັບການສືບພັນຕໍ່. |
| **Domestic Violence** *n.* | DV | ການຜິດຖຽງກັນຮຸນແຮງຢູ່ໃນຄອບຄົວ | Physical abuse and threats by one person in a family against another. **Laotian –** ການຂົ່ມເຫັງທາງຮ່າງກາຍ ແລະ ການຂົ່ມຂູ່ໂດຍຄົນນຶ່ງຢູ່ໃນຄອບຄົວໃສ່ອີກຄົນນຶ່ງ. |
| **Due Process** *n.* | | ຫລັກດຳເນີນການຂອງສານ | A course of action that protects a person's legal rights. **Laotian –** ວິທີການກະທຳຊຶ່ງປ້ອງກັນສິດທິຕາມກົດຫມາຍຂອງບຸກຄົນ. |
| **Earliest Accrued Arrears** *n.* | EAA | ຫນີ້ບໍ່ໄດ້ຈ່າຍກາຍຜ່ານມາທີ່ເກີດຂຶ້ນກ່ອນຫມູ່ຫມົດ | The oldest debt collectible under the statute of limitations. **Laotian –** ຫນີ້ເກົ່າແກ່ກວ່າຫມູ່ທີ່ເກັບຄືນເອົາໄດ້ພາຍໃຕ້ກົດຫມາຍຂອບເຂດເວລາທີ່ຈະຟ້ອງເອົາໄດ້. |
| **Earnings** *n.* | | ຣາຍໄດ້ທີ່ເຮັດວຽກເອົາ | Compensation paid or payable for services: wages, salary, commissions and bonuses. **Laotian –** ເງິນທົດແທນທີ່ຖືກຈ່າຍໃຫ້ ຫລື ຈ່າຍໃຫ້ໄດ້ສຳລັບການບໍຣິການ: ເງິນເຮັດວຽກ, ເງິນເດືອນ, ເງິນແບ່ງສ່ວນ ແລະ ໂບນັສ. |
| **Economic Services Administration** *n.* | ESA | ພະແນກບໍຣິຫານປົກຄອງດ້ານການເສຖກິດ | An administration in DSHS that administers DCS and CSD. **Laotian –** ພະແນກປົກຄອງຢູ່ໃນກົມ **DSHS** ທີ່ຄວບຄຸມບໍຣິຫານພະແນກ **DCS** ແລະ **CSD**. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Electronic Birth Certificate System**<br>*n.* | EBC | ລະບົບເອເລກ ໂຕຣນິກສຳລັບ ໃບລາຍເກີດ | Computer program that allows hospitals in Washington state to create a birth certificate electronically and transmit the completed birth certificate to the Center for Health Statistics (CHS). **Laotian –** ໂຄງການຄອມພິວເຕີທີ່ອະນຸຍາດໃຫ້ໂຮງພະຍາບານຂອງຣັດວໍຊິງຕັນທີ່ຈະເຮັດໃບຢັ້ງຢືນການເກີດ ແລະ ສົ່ງໃບຢັ້ງຢືນການເກີດທີ່ຖືກຂຽນປະກອບແລ້ວເຂົ້າໄປຫາສູນກາງສຳລັບສະຖິຕິການເກີດການຕາຍ**(CHS)**. |
| **Electronic Funds Transfer**<br>*n.* | EFT | ການໂອນເງິນທາງ ເອເລກໂຕຣນິກ | The computerized process of moving money from DCS to a bank or from a bank to DCS. **Laotian –** ການດຳເນີນການທາງຄອມພິວເຕີຂອງການເຄື່ອນຍ້າຍເງິນຈາກພະແນກ **DCS** ໄປຫາທະນາຄານ ຫລື ຈາກທະນາຄານໄປຫາພະແນກ **DCS**. |
| **Emancipated Child**<br>*n.* | | ເດັກນ້ອຍທີ່ຖືກປົດ ປ່ອຍໃຫ້ເປັນອິສຣະ | A child under 18 years of age who is no longer subject to parental control. **Laotian –** ເດັກນ້ອຍອາຍຸຕ່ຳກວ່າ **18** ປີຜູ້ທີ່ບໍ່ຢູ່ໃນການຄວບຄຸມຂອງພໍ່ແມ່ຕໍ່ໄປອີກແລ້ວ. |
| **Employee**<br>*n.* | | ພະນັກງານ | A person to whom an employer is paying, owes or expects to pay earnings in exchange for services or work performed for the employer. **Laotian –** ບຸກຄົນຜູ້ທີ່ນາຍຈ້າງຈ່າຍເງິນໃຫ້, ຕິດໜີ້ຢູ່, ຫລື ຄາດວ່າຈະຈ່າຍເງິນຣາຍໄດ້ໃຫ້ເປັນການແລກປ່ຽນເອົາການບໍຣິການ ຫລື ວຽກທີ່ຖືກເຮັດສຳລັບນາຍຈ້າງ. |
| **Employment**<br>*n.* | | ວຽກງານ | Services performed for earnings. **Laotian –** ການບໍຣິການທີ່ຖືກເຮັດສຳລັບຣາຍໄດ້ທີ່ເຮັດວຽກເອົາ. |
| **Enclosed,**<br>*v.*<br>**Enclosure**<br>*n.* | ERP | ຖືກລັດມານຳ, ສິ່ງທີ່ຖືກລັດມານຳ | Something that is put in an envelope with a letter. **Laotian –** ສິ່ງໃດສິ່ງນຶ່ງທີ່ຖືກເອົາໃສ່ໃນຊອງພ້ອມທັງໜັງສື. |
| **Enforce, Enforcement**<br>*v.* | ENF | ບັງຄັບໃຊ້, ການບັງຄັບໃຊ້ | To force someone to act or obey (as under law). **Laotian –** ທີ່ຈະບັງຄັບຄົນໃດຄົນນຶ່ງໃຫ້ກະທຳ ຫລື ເຊື່ອຟັງ (ຢູ່ພາຍໃຕ້ກົດໝາຍ). |
| **English-language Learner**<br>*n.* | ELL | ຜູ້ຮຽນຮູ້ພາສາອັງກິດ | This refers to people with limited English abilities. **Laotian –** ອັນນີ້ເວົ້າເຖິງບຸກຄົນຜູ້ທີ່ມີຄວາມສາມາດປາກເວົ້າພາສາອັງກິດຈຳກັດ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Established**<br>*v.* | EST | ຖືກກໍ່ຕັ້ງ | To cause to be recognized and accepted often because of a law. **Laotian –** ທີ່ຈະເຮັດໃຫ້ຖືກຮັບຮູ້ ແລະ ຖືກຮັບເອົາສ່ວນຫລາຍແລ້ວຍ້ອນກົດຫມາຍ. |
| **Expenses**<br>*n.* | EXP | ຣາຍຈ່າຍ | Money allotted for a payment. **Laotian –** ເງິນທີ່ຖືກແບ່ງໄວ້ສຳລັບການຈ່າຍເງິນ. |
| **Extraordinary Health Care Expense**<br>*n.* | | ຣາຍຈ່າຍຄ່າປິ່ນປົວສຸຂະພາບຜິດປົກກະຕິ | Monthly health care expenses that exceed five percent of the basic child support obligation. **Laotian –** ຣາຍຈ່າຍຄ່າປິ່ນປົວສຸຂະພາບປະຈຳເດືອນຊຶ່ງກາຍເກີນຫ້າເປີເຊັນຂອງຄວາມຮັບຜິດຊອບໃນເງິນລ້ຽງລູກພື້ນຖານ. |
| **Family**<br>*n.* | FAM | ຄອບຄົວ | The person or persons on whose behalf support is asked, including a custodial parent and one or more children, or a child or children in foster care placement. The family is sometimes called the assistance unit. **Laotian –** ຄົນນຶ່ງ ຫລື ຄົນຫລາຍຄົນຊຶ່ງໃນນາມຂອງເຂົາເຈົ້າ ການອູ້ມຊູໄດ້ຖືກຂໍເອົາ, ລວມທັງພໍ່ແມ່ຜູ້ມີຄວາມຄຸ້ມຄອງ ແລະ ເດັກນ້ອຍຄົນນຶ່ງ ຫລື ຫລາຍຄົນ, ຫລື ເດັກນ້ອຍຄົນນຶ່ງ ຫລື ເດັກ ນ້ອຍຫລາຍຄົນຢູ່ໃນການຈັດໃສ່ການເບິ່ງແຍງດູແລເດັກກຳພ້າ. ຄອບຄົວບາງເທື່ອໄດ້ຖືກເອີ້ນວ່າຫນ່ວຍຮັບເອົາການຊ່ວຍເຫລືອ. |
| **Family Independence Program**<br>*n.* | FIP | ໂຄງການອິສຣະພາບແຫ່ງຄອບຄົວ | An experimental Washington state public assistance program (1988-1993) that paid cash incentives for participation in education, training or work. **Laotian –** ໂຄງການຊ່ວຍເຫລືອເງິນສາທາຣະນະທົດລອງຂອງຣັດວໍຊິງຕັນ **(1988-1993)** ຊຶ່ງຈ່າຍເງິນຈູງໃຈສຳລັບການເຂົ້າຮ່ວມໃນການສຶກສາ, ການຝຶກຝົນ, ຫລື ວຽກງານ. |
| **Family Law Facilitator**<br>*n.* | | ຜູ້ອຳນວຍຄວາມສະດວກດ້ານກົດຫມາຍຄອບຄົວ | A staff person in a county clerk's office who distributes forms and information about court processes like modifying a court order, filing for divorce and filing a parenting plan. **Laotian –** ພະນັກງານຢູ່ຫ້ອງການສະມຽນຂອງເທສບານຜູ້ທີ່ແຈກຢາຍໃບຟອມ ແລະ ຣາຍລະອຽດກ່ຽວກັບການດຳເນີນການຂອງສານເຊັ່ນວ່າ: ການດັດແປງຄຳສັ່ງຂອງສານ, ການຍື່ນຟ້ອງເອົາການຢ່າຮ້າງ ແລະ ການຍື່ນແຜນການລ້ຽງລູກ. |
| **Family Member**<br>*n.* | | ສະມາຊິກຄອບຄົວ | The caretaker relative, the child(ren) and any other person whose needs are considered in determining eligibility for assistance. **Laotian –** ພີ່ນ້ອງຜູ້ເບິ່ງແຍງດູແລ, ເດັກນ້ອຍ, ແລະ ຄົນອື່ນຄົນໃດຄົນນຶ່ງຜູ້ທີ່ຄວາມຕ້ອງການຂອງເຂົາເຈົ້າໄດ້ຖືກຄິດໄລ່ໃສ່ໃນການພິຈາຣະນາເບິ່ງສິດທີຮັບການຊ່ວຍເຫລືອ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Family Support Act of 1988**<br>*n.* | | ກົດໝາຍອຸ້ມຊູຄອບຄົວຂອງປີ 1988 | A federal act, revised in 1989, dealing with child support enforcement. **Laotian –** ກົດໝາຍຂອງຣັຖບານກາງ, ຖືກດັດແປງໃນປີ **1989**, ກ່ຽວຂ້ອງນຳການບັງຄັບເກັບເງິນລ້ຽງລູກ. |
| **Federal**<br>*adj.* | FED | ຂອງຣັຖບານກາງ | The central government of the United States.<br>**Laotian –** ຣັຖບານສູນກາງຂອງສະຫາຣັດອະເມຣິກາ. |
| **Federal Case Registry**<br>*n.* | FCR | ທະບຽນສຳນວນເອກສານຂອງຣັຖບານກາງ | The FCR provides employer and IV-D case information to the states on their NCPs. **Laotian – FCR** ເອົາຊື່ຂອງນາຍຈ້າງ **EIA** ຣາຍລະອຽດຂອງສຳນວນເອກສານ **IVD** ໃຫ້ຣັດຂອງ **NCP** ຂອງເຂົາເຈົ້າ. |
| **Field Office**<br>*n.* | FO | ຫ້ອງການເຂດທ້ອງຖິ່ນ | A Division of Child Support office. **Laotian –** ຫ້ອງການຂອງພະແນກເກັບເງິນລ້ຽງລູກ. |
| **Filed**<br>*v.* | | ໄດ້ຖືກຍື່ນ | To enter legal documents on public official records.<br>**Laotian –** ທີ່ຈະເອົາເອກສານທາງກົດໝາຍເຂົ້າໃສ່ໃນບັນທຶກທາງການຂອງສາທາຣະນະ. |
| **Final Court order**<br>*n.* | | ຄຳສັ່ງສານບັ້ນສຸດທ້າຍ | An order that settles issues such as child support, custody, paternity and property distribution and specific court actions. **Laotian –** ຄຳສັ່ງຊຶ່ງໄດ້ຕົກລົງເຣື່ອງກັນເຊັ່ນວ່າຄຳສັ່ງເງິນລ້ຽງລູກ, ການຄຸ້ມຄອງ, ສາຍເລືອດພໍ່ລູກ, ແລະ ການແຈກຢາຍຊັບສິນບັດ ແລະ ການກະທຳຂອງສານອັນເຈາະຈົງ. |
| **Findings of Fact**<br>*n.* | FFCL | ການພົບເຫັນຂໍ້ຄວາມຈິງ | The conclusion or decision reached in a case at law, by evidence, as distinguished from interpretation of law.<br>**Laotian –** ການສລຸບຄວາມ ຫລື ການຕັດສິນທີ່ຕົກລົງກັນໄດ້ຢູ່ໃນຄະດີທາງກົດໝາຍ, ໂດຍຫລັກຖານ, ຕາມທີ່ຖືກເຫັນຄວາມແຕກຕ່າງກັນຈາກການຕີຄວາມໝາຍຂອງກົດໝາຍ. |
| **Food Stamps**<br>*n.* | FS | ຟູດສະແຕມ | The DSHS IV-A program responsible for administering the federal United States Department of Agriculture food to families in need. See Basic Food Assistance.<br>**Laotian –** ໂຄງການ **DSHS IVA** ທີ່ຮັບຜິດຊອບສຳລັບການຄວບຄຸມບໍຣິຫານດ້ານອາຫານຂອງກົມກະສິກັມແຫ່ງສະຫາຣັດຂອງຣັຖບານກາງໃຫ້ແກ່ຄອບຄົວທີ່ຕ້ອງການ. |
| **Foreign order**<br>*n.* | | ຄຳສັ່ງຕ່າງປະເທດ | Any order issued by a jurisdiction other than a state of the United States (Indian Tribe, District of Columbia and Puerto Rico, U.S. Virgin Islands). **Laotian –** ຄຳສັ່ງຕ່າງໆທີ່ຖືກເຮັດອອກມາໂດຍທາງອຳນາດສານນອກຈາກຂອງປະເທດສະຫາຣັດອະເມຣິກາ (ຊົນເຜົ່າອິນດຽນ,**District of Columbia** ແລະ **Puerto Rico, U.S. Virgin Islands).** |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Foster Care** *n.* | FC | ການເບິ່ງແຍງດູແລເດັກກຳພ້າ | The placement of children in homes under the care of adults who are not their natural parents. **Laotian –** ການຈັດເດັກນ້ອຍໃສ່ໃນເຮືອນພາຍໃຕ້ການເບິ່ງແຍງດູແລຂອງຜູ້ໃຫຍ່ຜູ້ທີ່ບໍ່ແມ່ນພໍ່ແມ່ກຳເນີດຂອງເຂົາເຈົ້າ. |
| **Foster Care Program IV-E,** *n.* | 4E | ໂຄງການເບິ່ງແຍງດູແລເດັກກຳພ້າ IV-E | The Washington state program administered by DSHS Children's Administration. **Laotian –** ໂຄງການຂອງຣັດວໍຊິງຕັນທີ່ຖືກຄວບຄຸມບໍຣິຫານໂດຍພະແນກປົກຄອງເດັກນ້ອຍຂອງກົມ **DSHS**. |
| **Fraud** *n.* | | ການສໍ້ໂກງ | The misrepresentation of the existence or the non-existence of a fact. **Laotian –** ການສະເໜີອັນບໍ່ຖືກຕ້ອງຂອງການມີຢູ່ ຫລືການບໍ່ມີຢູ່ຂອງຄວາມຈິງ. |
| **Full credit profile report** *n.* | | ຣາຍງານຮູບຮ່າງຂອງເຄຣດິດອັນຄົບຖ້ວນ | A listing by the credit bureau of an individual's current name and address, employer, credit and trade lines, public record information and previous inquiries. **Laotian –** ລາຍການຂຽນລົງໄປໂດຍຫ້ອງການເຄຣດິດບິວໂຣຂອງຊື່ແລະ ທີ່ຢູ່ປັດຈຸບັນຂອງບຸກຄົນ, ນາຍຈ້າງ, ຂອບເຂດຂອງເຄຣດິດ ແລະ ການຄ້າ, ຣາຍລະອຽດບັນທຶກສາທາຣະນະ ແລະ ການຮ້ອງຂໍເບິ່ງໃນຜ່ານມາ. |
| **Full support enforcement services** *n.* | | ການບໍຣິການບັງຄັບເກັບເງິນລ້ຽງລູກເຕັມທີ່ | The services available in a Title IV-D case, including the establishment of child support orders, paternity establishment, enforcement of child support and spousal support orders, establishment and enforcement of medical support, modificaton of support orders and distribution of child support and spousal support payments. **Laotian –** ການບໍຣິການທີ່ມີໄວ້ໃຫ້ໃນສຳນວນເອກສານ **Title IV-D,** ລວມທັງການກໍ່ຕັ້ງຄຳສັ່ງຈ່າຍເງິນລ້ຽງລູກ, ການກໍ່ຕັ້ງສາຍເລືອດພໍ່ລູກ, ການບັງຄັບໃຊ້ຄຳສັ່ງເກັບເງິນລ້ຽງລູກ ແລະ ຄຳສັ່ງເກັບເງິນລ້ຽງຄູ່ຜົວເມັຽ, ການກໍ່ຕັ້ງ ແລະ ການບັງຄັບໃຊ້ການອູ້ມຊູດ້ານພະຍາບານ, ການດັດແປງຄຳສັ່ງຈ່າຍເງິນລ້ຽງລູກ ແລະ ການແຈກຢາຍເງິນລ້ຽງລູກ ແລະ ເງິນລ້ຽງຄູ່ຜົວເມັຽ. |
| **Garnishment** *n.* | | ການກັກເອົາເງິນໄວ້ | A Washington state superior court order for seizing wages to pay a debt. **Laotian –** ຄຳສັ່ງຈາກສານສູງສຸດຂອງຣັດວໍຊິງຕັນສຳລັບການຍຶດເອົາເງິນເດືອນເພື່ອຈະຈ່າຍໜີ້. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **General Assistance** *n.* | GA | ການຊ່ວຍເຫລືອທົ່ວໄປ | Programs that pay a cash grant including Aged, Blind or Disabled (ABD) or Pregnant Women's Assistance (PWA) and programs that provide non-cash assistance such as a referral for Housing and Emergent Needs (HEN). **Laotian –** ໂຄງການທີ່ຈ່າຍເງິນສົດຊ່ວຍເຫລືອລວມທັງການຊ່ວຍເຫລືອສຳລັບຄົນອາຍຸແກ່, ຕາບອດ ຫລື ເສັຽອົງຄະ **(ABD)** ຫລື ສຳລາບຜູ້ຍິງຖືພາຕັ້ງທ້ອງ **(PWA)** ແລະ ໂຄງການທີ່ໃຫ້ການຊ່ວຍເຫລືອທີ່ບໍ່ແມ່ນເງິນສົດເຊັ່ນວ່າການສົ່ງຕໍ່ໄປຫາໂຄງການຊ່ວຍເຫລືອສຳລັບຄວາມຕ້ອງການດ້ານບ່ອນຢູ່ອາສັຍ ແລະ ສິ່ງຈຳເປັນ **(HEN)**. |
| **Genetic Test** *n.* | | ການກວດເບິ່ງເຊື້ອແນວ | An analysis of genetic markers only to exclude or identify a man as the father or a woman as the mother of a child. **Laotian –** ການວິຈັຍເບິ່ງເຄື່ອງຫມາຍຊີ້ບອກເຊື້ອແນວເທົ່ານັ້ນເພື່ອຈະຍົກເວັ້ນອອກ ຫລື ຊີ້ບອກຜູ້ຊາຍຄົນນຶ່ງວ່າເປັນພໍ່ ຫລື ວ່າຜູ້ຍິງຄົນນຶ່ງວ່າເປັນແມ່ຂອງເດັກນ້ອຍ. |
| **Good Cause** *n.* | GC | ສາເຫດດີ | A CSO determination, based upon potential harm to the CP or children that the CP does not have to cooperate with DCS. **Laotian –** ການພິຈາຣະນາເບິ່ງຂອງຫ້ອງການ **CSO,** ໂດຍອີງຕາມອັນຕະຣາຍທີ່ອາດເກີດຂຶ້ນໄດ້ຕໍ່ **CP** ຫລື ເດັກນ້ອຍຊຶ່ງວ່າ **CP** ບໍ່ຕ້ອງໄດ້ຮ່ວມມືນຳຜະແນກ **DCS**. |
| **Good Cause for a late hearing** *n.* | | ເຫດຜົນເຫມາະດີສຳລັບການຟັງເຣື່ອງຊ້າ | The circumstances that make it difficult to respond with specific time frames to any DCS notice or action giving hearing rights. **Laotian –** ສະພາບການຊຶ່ງເຮັດໃຫ້ຫຍຸ້ງຍາກທີ່ຈະຕອບມາໃນຂອບເຂດເວລາອັນເຈາະຈົງຕໍ່ໃບແຈ້ງການຂອງຜະແນກ **DCS**ຫລື ການການກະທຳຕ່າງໆທີ່ເອົາສິດທິການຟັງເຣື່ອງໃຫ້. |
| **Government** *n.* | GOVT | ຣັຖບານ | The political administration and control of public policy. **Laotian –** ຜະແນກບໍຣິຫານປົກຄອງດ້ານການເມືອງ ແລະ ການຄວບຄຸມນະໂຍບາຍສາທາຣະນະ. |
| **Grace period** *n.* | | ຣະຍະເວລາອະນຸໂລມ | A specified time period in a court or administrative order after the due date and before collection action is taken. **Laotian –** ຣະຍະເວລາອັນເຈາະຈົງຢູ່ໃນຄຳສັ່ງຂອງສານ ຫລື ອຳນາດການປົກຄອງຫລັງຈາກວັນທີຕ້ອງໄດ້ຈ່າຍ ແລະ ກ່ອນການກະທຳເກັບເອົາເງິນຈະຖືກເຮັດ. |
| **Head of Household** *n.* | | ຫົວຫນ້າຂອງຄອບຄົວ | The parent or parents in a child's home. **Laotian –** ພໍ່ແມ່ຄົນນຶ່ງ ຫລື ຫລາຍຄົນຢູ່ໃນເຮືອນຂອງເດັກນ້ອຍ. |
| **Headquarters** *n.* | HQ | ສຳນັກງານໃຫຍ່ | An administration or operations center. **Laotian –** ສູນກາງບໍຣິຫານຄວບຄຸມ ຫລື ສູນກາງດຳເນີນງານ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Health care costs** *n.* | | ຄ່າການປິ່ນປົວສຸຂະພາບ | The medical, dental and optometric expenses established in the support obligations or stated as a fixed dollar amount by a child support order. **Laotian –** ລາຍຈ່າຍຄ່າພະຍາບານ, ແຂ້ວ ແລະ ຕາຊຶ່ງຖືກກໍ່ຕັ້ງຢູ່ໃນຄວາມຮັບຜິດຊອບລ້ຽງລູກ ຫລື ຖືກກ່າວວ່າເປັນຈຳນວນເງິນຕາຍໂຕໂດຍຄຳສັ່ງຈ່າຍເງິນລ້ຽງລູກ. |
| **Health insurance** *n.* | | ປະກັນພັຍສຸຂະພາບ | Insurance coverage for all medical services related to a person's general health and well-being. **Laotian –** ການຄຸ້ມກັນປະກັນພັຍສຳລັບການບໍຣິການດ້ານພະຍາບານທຸກໆຢ່າງທີ່ກ່ຽວພັນນຳສຸຂະພາບທົ່ວໄປ ແລະ ຄວາມຢູ່ເຢັນເປັນສຸກຂອງບຸກຄົນ. |
| **Hearing** *n.* | HRG | ການຟັງເຣື່ອງ | A proceeding before an Administrative Law Judge at the Office of Administrative Hearings (OAH) that gives a party an opportunity to be heard in disputes about a DSHS program. **Laotian –** ການດຳເນີນການຕໍ່ຫນ້າຈ່າສານກົດຫມາຍອຳນາດການປົກຄອງຢູ່ທີ່ຫ້ອງການການຟັງເຣື່ອງຂອງອຳນາດການປົກຄອງ **(OAH)** ທີ່ໃຫ້ໂອກາດແກ່ອີກຝ່າຍນຶ່ງທີ່ຈະໄດ້ຍິນໃນການລັດແຍ້ງກ່ຽວກັບໂຄງການຂອງກົມ **DSHS.** |
| **Home state** *n.* | | ຣັດຂອງເຮືອນຢູ່ | The state a child lived in with a parent for at least six consecutive months immediately before the time of filing of a petition for child support. **Laotian –** ຣັດທີ່ເດັກນ້ອຍອາສັຍຢູ່ນຳພໍ່ແມ່ຄົນນຶ່ງຢ່າງຫນ້ອຍຫົກເດືອນຕິດຕໍ່ກັນທັນທີກ່ອນເວລາຂອງການຍື່ນໃບຟ້ອງຮ້ອງຂໍເອົາເງິນລ້ຽງລູກ. |
| **Household** *n.* | HH | ຄອບຄົວ | A place and the members of a family and others who live under the same roof. **Laotian –** ບ່ອນຢູ່ ແລະ ສະມາຊິກຂອງຄອບຄົວ ແລະ ຄົນອື່ນຜູ້ທີ່ອາສັຍຢູ່ພາຍໃຕ້ຫລັງຄາອັນດຽວກັນ. |
| **Husband** *n.* | HUSB | ຜົວ | A married man. **Laotian –** ຜູ້ຊາຍຜູ້ໄດ້ແຕ່ງງານແລ້ວ. |
| **Immediate Wage Withholding** *n.* | IWW | ການກັກເອົາເງິນຄ່າຈ້າງທັນທີ | A requirement of the federal Family Support Act that state IV-D agencies take wage withholding actions immediately after a child support order is issued. **Laotian –** ກົດກຳນົດຂອງກົດຫມາຍອູ້ມຊູຄອບຄົວຂອງຣັຖບານກາງ**(Family Support Act)** ຊຶ່ງກ່າວວ່າຫ້ອງການ **IVD** ຈະທຳການກັກເອົາເງິນຄ່າຈ້າງໂດຍທັນທີໂລດຫລັງຈາກຄຳສັ່ງຈ່າຍເງິນລ້ຽງລູກໄດ້ຖືກເຣັດອອກມາ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Immediate Wage Withholding Order**<br>*n.* | | ຄຳສັ່ງສຳລັບການຫັກເອົາເງິນຄ່າຈ້າງທັນທີ | A support order entered on or after July 1, 1990 that has automatic notice and enforcement language that says wage or income withholding may be taken at any time after the entry of the order. **Laotian –** ຄຳສັ່ງຈ່າຍເງິນລ້ຽງລູກທີ່ໄດ້ຖືກສັ່ງອອກມາໃນວັນທີ ຫລື ຫລັງຈາກເດືອນຈຸນລາຍ **1, 1990** ຊຶ່ງມີຄຳເວົ້າແຈ້ງການ ແລະ ບັງຄັບໃຊ້ໂດຍ<br>ໂອໂຕມາຕິກໂລດຊຶ່ງກ່າວວ່າການຫັກເອົາເງິນຄ່າຈ້າງ ຫລື ລາຍໄດ້ຈະຖືກເຮັດໄດ້ໃນທຸກໆເວລາຫລັງຈາກການອອກຄຳສັ່ງມາ. |
| **Include, Including, Inclusive**<br>*v.* | INCL | ລວມເອົາ, ລວມທັງ, ລວມເຂົ້າໃສ່ | To add or put into a class, group or total. **Laotian –** ເພື່ອຈະຕື່ມໃສ່ ຫລື ເອົາໃສ່ໃນຈຳພວກ, ກຸ່ມ ຫລື ທັງຫມົດ. |
| **Income**<br>*n.* | | ລາຍໄດ້ | Earnings or other periodic payments of money from any source and any other property subject to withholding for child support under law. **Laotian –** ເງິນເຮັດວຽກເອົາ ຫລື ການຈ່າຍເງິນເປັນຣະຍະຢ່າງອື່ນຈາກແຫລ່ງຕ່າງໆ ແລະ ຊັບສິນບັດຢ່າງອື່ນແນວໃດແນວນຶ່ງຊຶ່ງຕ້ອງຖືກຫັກເອົາໃວ້ສຳລັບເງິນລ້ຽງລູກພາຍໃຕ້ກົດຫມາຍ. |
| **Income withholding action**<br>*n.* | | ການກະທຳຫັກເອົາລາຍໄດ້ໄວ້ | All withholding actions DCS is authorized to take. **Laotian –** ການກະທຳຫັກເອົາໄວ້ທຸກໆຢ່າງທີ່ພະແນກ **DCS** ໄດ້ຖືກອະນຸຍາດໃຫ້ເຮັດ. |
| **Income withholding order**<br>*n.* | | ຄຳສັ່ງຫັກເອົາລາຍໄດ້ໄວ້ | An order sent to an employer to take child support money from the earnings of an NCP. **Laotian –** ຄຳສັ່ງທີ່ຖືກສົ່ງໄປຫານາຍຈ້າງເພື່ອຈະເອົາເງິນລ້ຽງລູກຈາກລາຍໄດ້ທີ່ເຮັດວຽກເອົາຂອງ **NCP** ຄົນນຶ່ງ. |
| **Information**<br>*n.* | INFO | ລາຍລະອຽດ | Facts and knowledge shared as instruction  or experi-ence. **Laotian –** ຄວາມຈິງ ແລະ ຄວາມຮັບຮູ້ທີ່ຖືກແລກປ່ຽນກັນໃຫ້ເປັນຄຳແນະນຳ, ການສຶກສາເບິ່ງ ຫລື ການທົດລອງ. |
| **Initial Order**<br>*n.* | INIT | ຄຳສັ່ງເບື້ອງຕົ້ນ | A hearing decision made by an ALJ that may be reviewed by a DSHS Board of Appeals review judge. **Laotian –** ຄຳຕັດສິນຂອງການຟັງເຣື່ອງທີ່ຖືກເຮັດອອກມາໂດຍ **ALJ** ຊຶ່ງອາດຈະຖືກກວດເບິ່ງຄືນໄດ້ໂດຍຈ່າສານກວດເບິ່ງຄືນຂອງຄະນະກັມມະການການອຸທອນຂອງກົມ **DSHS**. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Initiating Jurisdiction** *n.* | IJ | ອຳນາດສານເລີ້ມຕົ້ນ | Also called Initiating State. In an interstate case, the state or jurisdiction that requests enforcement or establishment of a child support obligation by the state where the NCP lives or has assets. **Laotian –** ຍັງຖືກເອີ້ນອີກຄືກັນວ່າເປັນຣັດເລີ້ມຕົ້ນ. ຢູ່ໃນສຳນວນເອກສານຣະຫວ່າງຣັດ, ຣັດ ຫລື ອຳນາດສານບ່ອນທີ່ຮ້ອງຂໍເອົາການບັງຄັບໃຊ້ ຫລື ການກໍ່ຕັ້ງຄວາມຮັບຜິດຊອບໃນເງິນລ້ຽງລູກໂດຍຣັດບ່ອນທີ່ **NCP** ອາສັຍຢູ່ ຫລື ມີຊັບສິນຢູ່. |
| **Initiating State** *n.* | IS | ຣັດເລີ້ມຕົ້ນ | An initiating jurisdiction. **Laotian –** ອຳນາດສານບ່ອນເລີ້ມຕົ້ນ. |
| **Insurance** *n.* | INS | ປະກັນພັຍ | The medical, dental and optometrical coverage provided by an insurer. **Laotian –** ການຄຸ້ມກັນພະຍາບານ, ແຂ້ວ ແລະ ສາຍຕາທີ່ຖືກເອົາໃຫ້ໂດຍຜູ້ຮັບປະກັນ. |
| **Insurer** *n.* | | ຜູ້ຮັບປະກັນ | A company providing disability, health care services, health care coverage, a health maintenance organization or an employer or union providing health insurance coverage on a self-insured basis. **Laotian –** ບໍຣິສັດທີ່ເອົາການບໍຣິການປິ່ນປົວດ້ານຄວາມເສັຽອົງຄະ, ສຸຂະພາບ, ການຄຸ້ມກັນປິ່ນປົວສຸຂະພາບ, ອົງການຣັກສາສຸຂະພາບ ຫລື ນາຍຈ້າງ ຫລື ຢູນຽນບ່ອນທີ່ເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້ໃນແບບຮັບປະກັນໂດຍຕົນເອງ. |
| **Internal Revenue Service** *n.* | IRS | ພະແນກງົບປມານພາຍໃນ | A federal agency whose duties include collecting income tax. **Laotian –** ຫ້ອງການຂອງຣັຖບານກາງຜູ້ທີ່ມີໜ້າທີ່ຊຶ່ງລວມເອົາການເກັບເອົາພາສີຂອງຣາຍໄດ້. |
| **Intergovern-mental Wage Withholding** *v.* | ISW | ຂານກັກເອົາເງິນເອົາເງິນຄ່າຈ້າງຣະຫວ່າງຣັດຖະບານ | A process allowed under federal law that allows the establishment or enforcement of child support orders between states. **Laotian –** ການດຳເນີນທີ່ຖືກອະນຸຍາດໃຫ້ພາຍໃຕ້ກົດໝາຍຂອງຣັຖບານກາງຊຶ່ງອະນຸຍາດໃຫ້ມີການກໍ່ຕັ້ງ ຫລື ການບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງລູກຣະຫວ່າງຣັດ. |
| **IRS certification** *n.* | | ການຢັ້ງຢືນຂອງພະແນກ IRS | The formal documentation by the federal office of the Internal Revenue Service that identifies a person's income tax return for child support withholding action. **Laotian –** ເອກສານທາງການໂດຍຫ້ອງການຣັຖບານກາງຂອງພະແນກງົບປມານພາຍໃນຊຶ່ງຊີ້ບອກເງິນສົ່ງຄືນໃນພາສີຣາຍໄດ້ຂອງບຸກຄົນສຳລັບການກະທຳກັກເອົາເງິນລ້ຽງລູກໄວ້. |
| **IRS intercept** *n.* | | ການລັດເອົາເງິນຂອງພະແນກ IRS | Seizure of an NCP's federal income tax refund. **Laotian –** ການຍຶດເອົາເງິນສົ່ງຄືນໃນພາສີຣາຍໄດ້ຂອງ **NCP**. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **IRS offset**<br>*adv.* | | ການໄລ່ສະເລັ່ຽຂອງພະແນກ IRS | Internal Revenue Service action that reduces an NCP's federal income tax refund by the amount of a child support arrears debt. **Laotian –** ການກະທຳຂອງພະແນກງົບປະມານພາຍໃນຊຶ່ງລຸດເງິນສົ່ງ<br>ຄືນໃນພາສີລາຍໄດ້ຂອງ **NCP** ລົງໂດຍຈຳນວນເງິນຂອງໜີ້ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາ. |
| **Issuing state**<br>*n.* | | ຣັດທີ່ສົ່ງອອກມາ | The state a court issues a support order or makes a judgment determining parentage. **Laotian –** ຣັດບ່ອນທີ່ສານອອກໃບຄຳສັ່ງຈ່າຍເງິນລ້ຽງລູກ ຫລື ທຳການຕັດສິນການພິຈາຣະນາເຣື່ອງການລ້ຽງລູກ. |
| **IV-A, 4A**<br>*n.* | IV-A | IV-A, 4A | IV-A number - The number assigned by the CSO (Community Service Office) to a public assistance case. **Laotian –** ເລກ **IV-A -** ເລກທີ່ຖືກແຕ່ງຕັ້ງໂດຍຫ້ອງການ **CSO** (ຫ້ອງການບໍຣິການຊຸມນຸມຊົນ) ໃສ່ສຳນວນເອກສານເງິນຊ່ວຍເຫລືອສາທາຣະນະ. |
| **IV-D, 4D**<br>*n.* | IV-D | IV-D, 4D | IV-D (pronounced "four-D") - The title (section) of the Social Security Act that contains laws regarding child support enforcement and collection. **Laotian – IV-D** (ອ່ານອອກສຽງ "ຟໍຣ-ດີ") -ຊື່ຂື້ນຕົ້ນ (ພາກສ່ວນ) ຂອງກົດໝາຍຄວາມໝັ້ນຄົງຂອງສັງຄົມຊຶ່ງບັນຈຸກົດໝາຍກ່ຽວກັບການບັງຄັບໃຊ້ ແລະ ການເກັບເອົາເງິນລ້ຽງລູກ. |
| **IV-E, 4E**<br>*n.* | IV-E | IV-E, 4E | IV-E (pronounced "four-E") - The title (section) of the Social Security Act that contains the laws for the federally funded foster care program. **Laotian – IV-E (**ອ່ານອອກສຽງ **"ຟໍຣ-ອີ")-**ຊື່ (ພາກສ່ວນ) ຂອງກົດໝາຍຄວາມໝັ້ນຄົງຂອງສັງຄົມຊຶ່ງບັນຈຸກົດໝາຍສຳລັບໂຄງການເບິ່ງແຍງດູແລເດັກກຳພ້າຊຶ່ງໄດ້ເງິນທຶນມາຈາກຣັຖບານກາງ. |
| **Judgment**<br>*n.* | JGMT | ຄຳຕັດສິນໃຫ້ຈ່າຍຈາກສານ | A court order to pay a certain sum established by the court for costs, fees, etc. **Laotian –** ຄຳສັ່ງຈາກສານທີ່ຈະຈ່າຍເງິນບາງຈຳນວນຊຶ່ງໄດ້ຖືກກໍ່ຕັ້ງໂດຍສານສຳລັບຄ່າ, ຄ່າທຳນຽມ, ອື່ນໆ. |
| **Judgment lien**<br>*n.* | | ການຜູກມັດໃສ່ຄຳຕັດສິນໃຫ້ຈ່າຍຈາກສານ | A lien created by the entry of a court-ordered sum by certain judgment. **Laotian –** ການຜູກມັດໃສ່ຊຶ່ງໄດ້ຖືກເຣັດຂື້ນໂດຍການບັນທຶກຈຳນວນເງິນທີ່ຖືກສັ່ງອອກມາໂດຍສານເຂົ້າໃສ່ໂດຍຄຳຕັດສິນຈາກສານໃບໃດໃບນຶ່ງ. |
| **Jurisdiction**<br>*n.* | JURIS | ອຳນາດສານ | The authority of a court, agency or government to decide a case or legal issue, or to take action against a person or a person's assets. **Laotian –** ອຳນາດຂອງສານ, ຫ້ອງການ, ຫລື ຣັຖບານທີ່ຈະຕັດສິນຄະດີ ຫລື ເຣື່ອງບັນຫາກົດໝາຍ, ຫລື ທີ່ຈະຈັດການໃສ່ບຸກຄົນ ຫລື ຊັບສິນບັດຂອງບຸກຄົນ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Juvenile**<br>*n.* | JUV | ເດັກນ້ອຍວັຍຣຸ່ນ | A child 18 years and younger. **Laotian –** ເດັກນ້ອຍອາຍຸ **18** ແລະ ໜຸ່ມກວ່າ. |
| **Juvenile Rehabilitation**<br>*n.* | JR | ການຝຶກຝົນໃຫ້ດີຄືນສຳລັບເດັກວັຍຣຸ່ນ | Serves Washington state's highest-risk youth. Youth are committed to Juvenile Rehabilitation custody through county juvenile courts. **Laotian –** ຮັບໃຊ້ຊາວໜຸ່ມທີ່ມີການສ່ຽງຕໍ່ອັນຕະລາຍສູງຂອງຣັດວໍຊິງຕັນ.ຊາວໜຸ່ມຈະມອບໝາຍໃສ່ໃນຄວາມຄຸ້ມຄອງຂອງການຝຶກແອບໃຫ້ດີຄືນສຳລັບຊາວໜຸ່ມໂດຍຜ່ານສານເຍົາວະຊົນຂອງຄາວຕີ. |
| **Labor and Industries**<br>*n.* | L&I | ແຮງງານ ແລະ ອຸດສາຫະກັມ | The Washington state agency that administers workers compensation benefits and injury claims. **Laotian –** ຫ້ອງການຂອງຣັດວໍຊິງຕັນຊຶ່ງຄວບຄຸມບໍຣິຫານສວັດດີການທົດແທນແຮງງານຂອງພະນັກງານ ແລະ ການທວງຟ້ອງຮ້ອງການໄດ້ຮັບບາດເຈັບ. |
| **Language**<br>*n.* | LANG | ພາສາ | The wording of a legal document or statute. **Laotian –** ຄວາມເວົ້າຂອງເອກສານທາງກົດໝາຍ ຫລື ກົດບັນຍັດ. |
| **Law**<br>*n.* | | ກົດໝາຍ | A rule or a system of rules established by authority, society or custom. **Laotian –** ກົດຣະບຽບ ຫລື ຣະບົບຂອງກົດຣະບຽບທີ່ຖືກກໍ່ຕັ້ງຂຶ້ນໂດຍເຈົ້າໜ້າທີ່, ສັງຄົມ, ຫລື ປະເພນີ. |
| **License**<br>*n.* | LIC | ໃບອະນຸຍາດ | Official or legal permission to do or own a specified thing, like drive a car or do a specific job. **Laotian –** ການອະນຸຍາດເປັນທາງການ ຫລື ຕາມກົດໝາຍທີ່ຈະເຮັດ ຫລື ເປັນເຈົ້າຂອງສິ່ງໃດສິ່ງນຶ່ງອັນເຈາະຈົງ, ເຊັ່ນວ່າຂັບຣົດ ຫລື ເຮັດວຽກອັນເຈາະຈົງ. |
| **License Suspension**<br>*n.* | | ການຍົກເລີກຊົ່ວຄາວໃສ່ໃບອະນຸຍາດ | The act of denying a person a driver's license to drive a vehicle, hunt for game or fish. **Laotian –** ການກະທຳຂອງການປະຕິເສດໃບອະນຸຍາດທີ່ຈະຂັບຣົດ, ລ່າສັດແຂ່ງຂັນກັນ ຫລື ຕຶກປາຂອງບຸກຄົນ. |
| **Limited English Speaking**<br>*n.* | LES | ການປາກເວົ້າພາສາອັງກິດອັນຈຳກັດ | This refers to persons who do not or have little knowledge and usage of the English language. **Laotian –** ອັນນີ້ອ້າງອີງເຖິງບຸກຄົນຜູ້ທີ່ບໍ່ມີ ຫລື ມີຄວາມຮູ້ ແລະ ການໃຊ້ພາສາອັງກິດໜ້ອຍນຶ່ງ. |
| **Locate, Located, Location**<br>*v.* | LOC | ຊອກຫາ, ຖືກຊອກຫາ, ສະຖານທີ່ | Efforts to find an NCP to serve a notice or collect child support. **Laotian –** ຄວາມພະຍາຍາມທີ່ຈະຊອກຫາ **NCP** ເພື່ອຈະສົ່ງໃບແຈ້ງການໃຫ້ ຫລື ເພື່ອຈະເກັບເອົາເງິນລ້ຽງລູກ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Long-arm Statute** *n.* | | ກົດບັນຍັດແຂນຍາວ | State law allows the authority to collect child support from a person living in another state. **Laotian –** ກົດຫມາຍຂອງຣັດ-ອະນຸຍາດ ໃຫ້ເຈົ້າຫນ້າທີ່ທີ່ຈະເກັບເອົາເງິນລ້ຽງລູກຈາກບຸກຄົນຜູ້ທີ່ອາສັຍຢູ່ໃນຣັດອື່ນ. |
| **Medical Assistance Only** *n.* | MAO | ການຊ່ວຍເຫລືອພະຍາບານເທົ່ານັ້ນ | A DCS phrase for cases when the custodial parent receives Medicaid (medical assistance) but does not receive public assistance money. **Laotian –** ສຳນວນຂອງພະແນກ **DCS** ສຳລັບສຳນວນເອກສານເມື່ອພໍ່ແມ່ຜູ້ມີຄວາມຄຸ້ມຄອງໄດ້ຮັບເມດິເຄດ໌ (ການຊ່ວຍເຫລືອພະຍາບານ) ແຕ່ວ່າບໍ່ໄດ້ຮັບເງິນຊ່ວຍເຫລືອສາທາຣະນະ. |
| **Medical Child Support Order** *n.* | MCSO | ຄຳສັ່ງອູ້ມຊູເດັກນ້ອຍດ້ານການພະຍາບານ | A court order issued by a jurisdiction or administrative agency that provides medical support for a child. **Laotian –** ຄຳສັ່ງຈາກສານທີ່ຖືກເຮັດອອກມາໂດຍອຳນາດສານ ຫລື ຫ້ອງການອຳນາດການປົກຄອງຊຶ່ງໃຫ້ການອູ້ມຊູດ້ານພະຍາບານສຳລັບເດັກນ້ອຍ. |
| **Medical Enforcement Only** *n.* | MEO | ການບັງຄັບໃຫ້ມີການປິ່ນປົວພະຍາບານເທົ່ານັ້ນ | Refers to cases where DCS only enforces health insurance for custodial parents. **Laotian –** ອ້າງອີງເຖິງສຳນວນເອກສານທີ່ພະແນກ **DCS** ບັງຄັບໃຫ້ມີປະກັນພັຍສຸຂະພາບເທົ່ານັ້ນສຳລັບພໍ່ແມ່ຜູ້ມີຄວາມຄຸ້ມຄອງ. |
| **Medical Support** *n.* | MED | ການອູ້ມຊູພະຍາບານ | The court ordered fixed dollar amount for health care costs or health insurance coverage for a child. **Laotian –** ຈຳນວນເງິນຕາຍໂຕທີ່ສານໄດ້ສັ່ງອອກມາສຳລັບຄ່າປິ່ນປົວສຸຂະພາບ ຫລື ການຄຸ້ມກັນປະກັນພັຍສຸຂະພາບສຳລັບເດັກນ້ອຍ. |
| **Minus, less** *v.* | - | ລົບອອກ, ລຸດເອົາ | A deduction…4 minus 2 or (4-2) or stating a smaller amount (it is less than…). **Laotian –** ການຫັກອອກ... **4** ລົບອອກ **2** ຫລື **(4-2)**, ຫລື ບອກຈຳນວນນ້ອຍກວ່າ (ມັນຕ່ຳກວ່າ...). |
| **Modification Conference** *n.* | | ການປະຊຸມກ່ຽວກັບການດັດແປງແກ້ໄຂ | An informal meeting where people with child support cases meet with a DCS attorney called a Claims Officer to talk about changing the amount of child support paid. **Laotian –** ການພົບກັນທີ່ບໍ່ເປັນທາງການບ່ອນທີ່ບຸກຄົນຜູ້ທີ່ມີສຳນວນເງິນລ້ຽງລູກຈະພົບກັນກັບທະນາຍຄວາມຂອງພະແນກ **DCS** ຜູ້ທີ່ຖືກເອີ້ນວ່າພະນັກງານທວງເງິນເພື່ອຈະເວົ້າລົມກ່ຽວກັບການປ່ຽນແປງຈຳນວນເງິນລ້ຽງລູກທີ່ຖືກຈ່າຍ. |
| **Modification, Modified** *n.* | MOD | ການດັດແປງແກ້ໄຂ, ຖືກດັດແປງແກ້ໄຂ | To change or make different from the original. **Laotian –** ເພື່ອຈະປ່ຽນແປງ ຫລື ເຮັດໃຫ້ແຕກຕ່າງຈາກສິ່ງດັ້ງເດີມ |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Modification review**<br>*n.* | | ການກວດເບິ່ງການດັດແປງຄືນ | Refers to a Support Enforcement Officers (SEO) evaluation of DCS records and a CP's or NCP's earnings and other information used to change child support and medical support. **Laotian –** ຫມາຍເຖິງການຕີຣາຄາປະເມີນຜົນເບິ່ງບັນທຶກຂອງພະແນກ **DCS** ຂອງພະນັກງານບັງຄັບເກັບເງິນລ້ຽງລູກ **(SEO)**ແລະ ຣາຍໄດ້ຂອງ **CP** ຫລື **NCP** ແລະຣາຍລະອຽດແນວອື່ນທີ່ຖືກໃຊ້ເພື່ອຈະປ່ຽນແປງເງິນລ້ຽງລູກຂອງການຂອງການອູ້ມຊູພະຍາບານ. |
| **Month By Month**<br>*n.* | MXM | ເດືອນຕໍ່ເດືອນ | A phrase used to describe a debt calculation that shows payments and nonpayment every month from the beginning of an order to pay child support. **Laotian –** ຖ້ອຍຄຳທີ່ຖືກໃຊ້ເພື່ອຈະບັນຣະຍາຍການຄິດໄລ່ຫນີ້ຊຶ່ງຈະສະແດງໃຫ້ເຫັນການຈ່າຍເງິນ ແລະ ການບໍ່ຈ່າຍເງິນໃນທຸກໆເດືອນຕັ້ງແຕ່ເລີ້ມຕົ້ນຂອງຄຳສັ່ງໃຫ້ຈ່າຍເງິນລ້ຽງລູກ. |
| **Monthly Arrears Payment**<br>*n.* | MAP | ການຈ່າຍຫນີ້ບໍ່ໄດ້ຈ່າຍ ກາຍຜ່ານມາປະຈຳເດືອນ | The least amount paid each month on an arrears debt. **Laotian –** ຈຳນວນເງິນຢ່າງຫນ້ອຍທີ່ຖືກຈ່າຍແຕ່ລະເດືອນໃສ່ຫນີ້ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາ. |
| **Monthly Order Amount**<br>*n.* | MOA | ຈຳນວນເງິນຂອງຄຳສັ່ງ ປະຈຳເດືອນ | The total amount ordered of current child support and spousal support. **Laotian –** ຈຳນວນເງິນທັງຫມົດທີ່ຖືກສັ່ງອອກມາສຳລັບເງິນລ້ຽງລູກ ແລະ ເງິນລ້ຽງຄູ່ຜົວເມັຽປັດຈຸບັນ. |
| **National Medical Support Notice**<br>*n.* | NMSN | ໃບແຈ້ງການອູ້ມຊູດ້ານ ພະຍາບານແຫ່ງຊາດ | A federal form used by DCS to tell an NCP to add children to a medical insurance policy. **Laotian –** ໃບຟອມຂອງຣັຖບານກາງທີ່ຖືກໃຊ້ໂດຍພະແນກ **DCS** ເພື່ອຈະບອກ **NCP** ໃຫ້ຕື່ມລູກເຂົ້າໃສ່ນະໂຍບາຍປະກັນພັຍພະຍາບານ. |
| **National Immigration Service**<br>*n.* | NIS | ພະແນກການເຂົ້າເມືອງ ແຫ່ງຊາດ | The federal department that administers immigration to the United States. **Laotian –** ກົມຂອງຣັຖບານກາງຊຶ່ງຄວບຄຸມບໍຣິຫານການກວດຄົນເຂົ້າເມືອງມາສູ່ສະຫາຣັດອະເມຣິກາ. |
| **Negotiate**<br>*v.* | NEG | ເຈຣະຈາຕົກລົງ | To talk to resolve a dispute. **Laotian –** ເພື່ອຈະເວົ້າກັນເພື່ອແກ້ໄຂການຂັດແຍ້ງ. |
| **Negotiated Settlement**<br>*n.* | | ການຕົກລົງທີ່ໄດ້ຖືກ ເຈຣະຈາຕົກລົງກັນ | A mutual agreement between an NCP and a CLO setting a child support debt. **Laotian –** ການຕົກລົງເຫັນພ້ອມຮ່ວມກັນຣະຫວ່າງ **NCP** ແລະ **CLO** ກໍ່ຕັ້ງຫນີ້ເງິນລ້ຽງລູກ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Net Income**<br>*n.* | | ຍອດຣາຍໄດ້ | Take home pay also called disposable earnings. The money left after legal deductions are taken from pay. **Laotian –** ເງິນຈ່າຍເອົາເມືອເຮືອນຊຶ່ງຍັງຖືກເອີ້ນອີກວ່າເປັນຣາຍໄດ້ທີ່ເຮັດວຽກເອົາຊຶ່ງຈະຖືກໃຊ້ຈ່າຍໄດ້. ເງິນຍັງເຫລືອຫລັງຈາກການຫັກເອົາອອກຕາມກົດໝາຍໄດ້ຖືກເອົາໄປຈາກເງິນຈ່າຍໃຫ້ແລ້ວ. |
| **Nonassistance**<br>*n.* | | ບໍ່ໄດ້ຮັບເງິນຊ່ວຍເຫລືອ | The term used to identify a child support case when the parties are not receiving public assistance (TANF). **Laotian –** ຖ້ອຍຄຳທີ່ຖືກໃຊ້ເພື່ອຈະຊີ້ບອກເອກສານເງິນລ້ຽງລູກໃນເມື່ອທຸກຝ່າຍບໍ່ໄດ້ຮັບເງິນຊ່ວຍເຫລືອສາທາຣະນະ **(TANF).** |
| **Nonassistance Case/Services**<br>*n.* | | ສຳນວນເອກສານ/ການບໍຣິການທີ່ບໍ່ໄດ້ຮັບເງິນຊ່ວຍເຫລືອ | DCS collection services for persons not getting public assistance money. **Laotian –** ການບໍຣິການເກັບເອົາເງິນຂອງພະແນກ **DCS** ສຳລັບບຸກຄົນຜູ້ທີ່ບໍ່ໄດ້ຮັບເງິນຊ່ວຍເຫລືອສາທາຣະນະ. |
| **Noncompliance**<br>*v.* | | ການບໍ່ປະຕິບັດຕາມ | An employer or union failure to: answer, send money and enroll children in medical insurance after legal service of a notice. **Laotian –** ຄວາມຜິດພາດຂອງນາຍຈ້າງ ຫລື ຢູນຽນທີ່ຈະ: ຕອບຄືນມາ, ສົ່ງເງິນ, ແລະ ຈົດຊື່ເດັກນ້ອຍເຂົ້າໃສ່ໃນປະກັນພັຍພະຍາ ບານຫລັງຈາກການສົ່ງໃບແຈ້ງການຕາມກົດໝາຍໃຫ້ແລ້ວ. |
| **Noncooperation**<br>*v.* | NON-COOP | ການບໍ່ຮ່ວມມືນຳ | A description of a CP's status when he or she does not give DCS information needed to enforce child support. **Laotian –** ການບັນຣະຍາຍສະພາບຂອງ **CP** ເມື່ອເວລາເຂົາເຈົ້າບໍ່ເອົາຣາຍລະອຽດທີ່ຕ້ອງການໃຫ້ພະແນກ **DCS** ເພື່ອຈະບັງຄັບໃຊ້ການເກັບເງິນລ້ຽງລູກ. |
| **Noncourt Ordered**<br>*v.* | NCO | ສິ່ງທີ່ຖືກສັ່ງອອກມາໂດຍບໍ່ແມ່ນສານ | Payment responsibilities not always listed in a court order like day care. **Laotian –** ຄວາມຮັບຜິດຊອບຈ່າຍເງິນບໍ່ໄດ້ຖືກບົ່ງຕລອດເວລາຢູ່ໃນຄຳສັ່ງຈາກສານເຊັ່ນວ່າການຝາກລູກ. |
| **Noncustodial Parent**<br>*n.* | NCP | ພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ | The parent who does not live in the home with the child and has a responsibility to pay support. NCPs are also referred to as nonresidential parents, noncustodial parents and responsible parents. **Laotian –** ພໍ່ແມ່ຜູ້ບໍ່ໄດ້ອາສັຍຢູ່ໃນເຮືອນນຳເດັກນ້ອຍ ແລະ ມີຄວາມຮັບຜິດຊອບທີ່ຈະຈ່າຍເງິນລ້ຽງລູກ. **NCP** ຍັງຖືກເອີ້ນອີກວ່າເປັນພໍ່ແມ່ຜູ້ບໍ່ອາສັຍຢູ່ໃນເຮືອນ, ພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ, ແລະ ພໍ່ແມ່ຜູ້ຮັບຜິດຊອບ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Non IV-D case**<br>*n.* | | ເອກສານທີ່ບໍ່ແມ່ນ IV-D | DCS cases that are not regulated under the Social Security Act: PSO, FCR, Unborn child, Employer Initiated, noncompliance fines and Spousal Support only cases. **Laotian –** ສຳນວນເອກສານຂອງພະແນກ **DCS** ທີ່ບໍ່ໄດ້ຖືກກຳນົດກົດເກນພາຍໃຕ້ກົດໝາຍ **Social Security Act: PSO, FCR,** ລູກບໍ່ທັນເກີດເທື່ອ, ເລີ້ມຕົ້ນໂດຍນາຍຈ້າງ, ການປັບໄໝສຳລັບການບໍ່ປະຕິບັດຕາມ ແລະ ສຳນວນເອກສານອູ້ມຊູຜົວເມັຽເທົ່ານັ້ນ. |
| **Nonresidential Parent**<br>*n.* | | ພໍ່ແມ່ຜູ້ບໍ່ໄດ້ອາສັຍຢູ່ໃນເຮືອນ | The person not designated as the primary custodian. Referred to as the noncustodial parent. **Laotian –** ບຸກຄົນຜູ້ບໍ່ໄດ້ຖືກແຕ່ງຕັ້ງວ່າເປັນຜູ້ປົກຄອງຕົ້ນຕໍ. ອ້າງອີງເຖິງວ່າເປັນພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ. |
| **Nonsufficient Funds**<br>*n.* | NSF | ເງິນທຶນທີ່ບໍ່ມີເງິນຈ່າຍໃຫ້ພຽງພໍ | A banking determination when there is not enough money in a bank account to pay a check written against the account. **Laotian –** ການຕົກລົງຄວາມເຫັນຂອງທະນາຄານເມື່ອເວລາບໍ່ມີເງິນພຽງພໍຢູ່ໃນບັນຊີທະນາຄານເພື່ອຈະຈ່າຍເຊັກທີ່ຖືກຂຽນໃສ່ບັນຊີ. |
| **Nonwage Enforcement Program**<br>*n.* | NWEP | ໂຄງການບັງຄັບໃຊ້ທີ່ບໍ່ມີເງິນຄ່າຈ້າງ | A DCS program that locates and seizes an NCP's personal property for nonpayment of child support. **Laotian –** ໂຄງການຂອງພະແນກ **DCS** ທີ່ຊອກຫາ ແລະ ຍຶດເອົາຊັບສິນບັດສ່ວນຕົວຂອງ **NCP** ສຳລັບການບໍ່ຈ່າຍເງິນລ້ຽງລູກ. |
| **Not Applicable**<br>*adv.* | N/A | ບໍ່ກ່ຽວຂ້ອງນຳ | A term used when a fact or information does not fit a specific situation. **Laotian –** ຖ້ອຍຄຳທີ່ຖືກໃຊ້ເມື່ອເວລາຄວາມຈິງ ຫລື ລາຍລະອຽດບໍ່ສອດຄ່ອງນຳສະພາບການອັນເຈາະຈົງ. |
| **Notice**<br>*n.* | | ໃບແຈ້ງການ | A letter with information that can be legally binding. **Laotian –** ໜັງສືທີ່ມີລາຍລະອຽດຊຶ່ງສາມາດຖືກຜູກມັດຕາມກົດໝາຍ. |
| **Notice and Finding of Parental Responsibility (DSHS 09-710)**<br>*n.* | NFPR | ໃບແຈ້ງການ ແລະ ການຄົ້ນພົບໃນຄວາມຮັບຜິດຊອບ ຂອງພໍ່ແມ່ (DSHS 09-710) | A legally based letter telling a man that he is the father of a child based on DNA testing. **Laotian –** ໜັງສືທີ່ຖືກອີງຕາມກົດໝາຍບອກວ່າລາວເປັນພໍ່ຂອງເດັກນ້ອຍອີງຕາມການກວດເບິ່ງ **DNA**. |
| **Notice and Finding of Financial Responsibility (DSHS 09-275)**<br>*n.* | NFFR | ໃບແຈ້ງການ ແລະ ການຄົ້ນພົບໃນຄວາມຮັບຜິດຊອບ ດ້ານການເງິນ (DSHS 09-275) | A legally based letter telling a parent that he or she must pay child support. **Laotian –** ໜັງສືທີ່ຖືກອີງຕາມກົດໝາຍບອກພໍ່ແມ່ຮູ້ວ່າເຂົາເຈົ້າຕ້ອງຈ່າຍເງິນລ້ຽງລູກ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Notice Of Appearance** *n.* | NOA | ໃບແຈ້ງການຂອງ ການມາປາກົດຕົວ | A formal letter providing information about a hearing or conference board date, time and place. **Laotian –** ໜັງສືທາງການທີ່ເອົາຣາຍລະອຽດໃຫ້ກ່ຽວກັບວັນທີ, ເວລາ, ແລະ ສະຖານທີ່ຂອງການຟັງເຣື່ອງ ຫລືການປະຊຸມຂອງຄະນະກັມມະການ. |
| **Object, Objection** *v.* | OBJ | ຄັດຄ້ານ, ການຄັດຄ້ານ | To oppose. To express a different opinion or position. **Laotian –** ທີ່ຈະຕໍ່ຕ້ານ. ທີ່ຈະສະແດງຄວາມເຫັນ ຫລື ທ່າທີແຕກຕ່າງ. |
| **Office of Administrator for the Courts** *n.* | | ຫ້ອງການຂອງຜູ້ບໍຣິຫານສຳລັບສານ | The office operates under the direction of the Chief Justice of Washington state supporting the statewide court computer system providing: information, technical support, education, and training for judicial officers, administrators, managers and other court personnel. **Laotian –** ຫ້ອງການດຳເນີນງານພາຍໄຕ້ການຊີ້ນຳຂອງຫົວໜ້າສານໃຫຍ່ຂອງຣັດວໍຊິງຕັນຊຶ່ງອູ້ມຊູຣະບົບຄອມພິວເຕີຂອງສານທົ່ວຣັດທີ່ຈະເອົາໃຫ້: ຣາຍລະອຽດ, ການອູ້ມຊູທາງເຕັກນິກ, ການສຶກສາ, ແລະ ການຝຶກຝົນສຳລັບເຈົ້າໜ້າທີ່ສານ, ຜູ້ປົກຄອງ, ຜູ້ຈັດການ ແລະ ເຈົ້າໜ້າທີ່ສານອື່ນໆ. |
| **Office of Financial Recovery** *n.* | OFR | ຫ້ອງການກອບກູ້ເອົາເງິນຄືນ | The DSHS program that collects public assistance overpayments. **Laotian –** ຫ້ອງການຂອງກົມ **DSHS** ທີ່ຈະເກັບເອົາເງິນຈ່າຍເກີນຄືນ ໃນການຊ່ວຍເຫລືອສາທາຣະນະ. |
| **Office of Fraud and Accountability** *n.* | OFA | ຫ້ອງການກ່ຽວກັບການສໍ້ໂກງ ແລະ ການຮັບຜິດຊອບ | The DSHS program that investigates public assistance fraud. **Laotian –** ຫ້ອງການຂອງກົມ ້ໍາສຫສ ທີ່ສືບສວນການສໍ້ໂກງໃນການຊ່ວຍເຫລືອສາທາຣະນະ. |
| **Office of Administrative Hearings** *n.* | OAH | ຫ້ອງການຟັງເຣື່ອງຂອງ ອຳນາດການປົກຄອງ | This office holds adjudicative proceedings and issues initial decisions, final decisions and orders for DCS. **Laotian –** ຫ້ອງການແຫ່ງນີ້ທຳການດຳເນີນການທາງສານ ແລະ ອອກໃບຕັດສິນເບື້ອງຕົ້ນ, ຄຳຕັດສິນ ແລະ ຄຳສັ່ງຂັ້ນສຸດທ້າຍສຳລັບຜະແນກ **DCS**. |
| **Office of Child Support Enforcement (Federal agency)** *n.* | OCSE | ຫ້ອງການບັງຄັບເກັບເງິນລ້ຽງລູກ (ຫ້ອງການຣັດ ບານກາງ) | A  U.S. Department of Health and Human Services (DHHS) division that monitors state IV-D agencies. **Laotian –** ຜະແນກ **U.S. Department of Health and Human Services (DHHS)** ທີ່ກຳກັບເບິ່ງນຳຫ້ອງການ **IV-D** ຂອງຣັດ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Order to Withhold and Deliver** *n.* | OWD | ຄຳສັ່ງໃຫ້ກັກເອົາໄວ້ ແລະ ສົ່ງຕໍ່ | The legal notice instructing an employer, bank or other entity to take money for child support from an employee's account or asset. **Laotian –** ໃບແຈ້ງການຕາມກົດໝາຍທີ່ຊີ້ນຳບອກໃຫ້ນາຍຈ້າງ, ທະນາຄານ ຫລື ບ່ອນອື່ນທີ່ຈະເອົາເງິນສຳລັບການລ້ຽງລູກຈາກບັນຊີ ຫລື ຊັບສິນບັດຂອງພະນັກງານ. |
| **Order to Withhold Income** *n.* | OWI | ຄຳສັ່ງໃຫ້ກັກເອົາລາຍໄດ້ໄວ້ | The legal notice instructing an employer to take money for child support from an employee's pay check or earnings. **Laotian –** ໃບແຈ້ງການຕາມກົດໝາຍທີ່ຊີ້ນຳບອກໃຫ້ນາຍຈ້າງທີ່ຈະເອົາເງິນສຳລັບການລ້ຽງລູກຈາກເຊັກເບີກເງິນ ຫລື ລາຍໄດ້ທີ່ເຮັດວຽກເອົາຂອງພະນັກງານ. |
| **Overpayment** *n.* | OP | ເງິນຈ່າຍເກີນ | The result of paying or being paid too much. **Laotian –** ຜົນອອກມາຂອງການຈ່າຍເງິນໃຫ້ ຫລື ຖືກຈ່າຍເງິນໃຫ້ຫລາຍເກີນໄປ. |
| **Parent** *n.* | | ພໍ່ແມ່ | A person who establishes a parent-child relationship by birth, adoption, voluntary acknowledgement of paternity. **Laotian –** ບຸກຄົນຜູ້ທີ່ກໍ່ຕັ້ງຄວາມສັມພັນຣະຫວ່າງພໍ່ແມ່-ລູກໂດຍການກຳເກີດ, ການເອົາໄປເປັນລູກລ້ຽງ, ການຮັບຮູ້ສາຍເລືອດພໍ່ລູກຕາມສະມັກໃຈ. |
| **Parent-child relationship** *n.* | | ຄວາມສັມພັນຣະຫວ່າງພໍ່ແມ່-ລູກ | The legal relationship between a parent and a child. **Laotian –** ຄວາມສັມພັນທາງກົດໝາຍຣະຫວ່າງ ພໍ່ແມ່ ແລະ ລູກ. |
| **Parenting Plan** *n.* | PP | ແຜນການລ້ຽງລູກ | An agreement between a child's mother and father stating how the child is to be raised. It also describes visitation occurrences. **Laotian –** ການຕົກລົງເຫັນພ້ອມຣະຫວ່າງພໍ່ ແລະ ແມ່ຂອງເດັກນ້ອຍທີ່ກ່າວວ່າເດັກນ້ອຍຈະຖືກລ້ຽງໃຫ້ໃຫຍ່ໄດ້ແນວໃດ. ມັນຍັງຈະບັນຣະຍາຍການເກີດຂື້ນໃນການປັຽມຢາມອີກ. |
| **Parties** *n.* | | ຝ່າຍ | Persons involved in a legal proceeding ("parties to the court order"). **Laotian –** ບຸກຄົນທີ່ກ່ຽວພັນນຳການດຳເນີນການທາງກົດໝາຍ ("ພາກສ່ວນຕໍ່ຄຳສັ່ງຂອງສານ"). |
| **Past due** *adv.* | | ກາຍຜ່ານມາ | A term used when a payment is not paid on or by the date specified in a court or administrative order. **Laotian –** ຖ້ອຍຄຳທີ່ຖືກໃຊ້ເມື່ອການຈ່າຍເງິນບໍ່ໄດ້ຖືກຈ່າຍໃນວັນທີ ຫລື ກ່ອນວັນທີທີ່ຖືກເຈາະຈົງຢູ່ໃນຄຳສັ່ງຂອງສານ ຫລື ອຳນາດການປົກຄອງ. |
| **Paternity** *n.* | PAT | ສາຍເລືອດພໍ່ລູກ | The fact of being a father. **Laotian –** ຄວາມຈິງຂອງການເປັນພໍ່ |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Paternity Acknowledge-ment**<br>*n.* | | ການຮັບຮູ້ສາຍເລືອດພໍ່ລູກ | A Department of Health form that allows a possible father and mother to voluntarily sign creating a presumption of paternity. **Laotian –** ໃບຟອມຂອງກົມສາທາລະນະສຸກທີ່ຈະອະນຸຍາດໃຫ້ພໍ່ ແລະ ແມ່ຜູ້ທີ່ອາດຈະເປັນໄປໄດ້ທີ່ຈະເຊັນຊື່ໂດຍສະມັກໃຈກໍ່ຕັ້ງການຮັບວ່າຮັບຮູ້ວ່າເປັນໄປໄດ້ຂອງສາຍເລືອດພໍ່ລູກ. |
| **Paternity Case**<br>*n.* | PAT | ສຳນວນເອກສານສາຍເລືອດພໍ່ລູກ | A child support case where the identity of the father is at issue for one or more children. **Laotian –** ສຳນວນເງິນລ້ຽງລູກຊຶ່ງວ່າເອກະລັກຂອງພໍ່ແມ່ນຍັງເປັນບັນຫາຢູ່ສຳລັບເດັກນ້ອຍຄົນນຶ່ງ ຫລື ຫລາຍຄົນ. |
| **Paternity Establishment Case**<br>*n.* | | ສຳນວນການກໍ່ຕັ້ງສາຍເລືອດພໍ່ລູກ | A case set up to refer to the Prosecuting Attorney to establish paternity. **Laotian –** ສຳນວນທີ່ຖືກກໍ່ຕັ້ງຂື້ນມາເພື່ອຈະສົ່ງຕໍ່ໄປຫາທະນາຍຄວາມຜູ້ພິພາກສາເພື່ອຈະກໍ່ຕັ້ງສາຍເລືອດພໍ່ລູກ. |
| **Paternity Order**<br>*n.* | | ຄຳສັ່ງກວດເບິ່ງສາຍເລືອດພໍ່ລູກ | A court order entered to establish legal fatherhood. **Laotian –** ຄຳສັ່ງສານທີ່ຖືກສັ່ງອອກມາເພື່ອຈະກໍ່ຕັ້ງການເປັນພໍ່ລູກກັນ. |
| **Paternity Test**<br>*n.* | | ການກວດເບິ່ງສາຍເລືອດພໍ່ລູກ | A genetic test of blood, tissue or bodily fluids to exclude or identify a man as the father of a child. **Laotian –** ການກວດເບິ່ງເຊື້ອສາຍຂອງເລືອດ, ເນື້ອ ຫລື ນ້ຳຈາກຮ່າງກາຍເພື່ອຈະຍົກເວັ້ນອອກ ຫລື ຊີ້ບອກຕົວຜູ້ຊາຍວ່າເປັນພໍ່ຂອງເດັກນ້ອຍ. |
| **Payee**<br>*n.* | | ຜູ້ອອກຊື່ຮັບເງິນ | The person named in a court order who is paid child sup-port. **Laotian –** ບຸກຄົນຜູ້ທີ່ຖືກບົ່ງຊື່ຢູ່ໃນຄຳສັ່ງຂອງສານຜູ້ທີ່ເງິນລ້ຽງລູກໄດ້ຖືກຈ່າຍໃຫ້. |
| **Payer**<br>*n.* | | ຜູ້ຈ່າຍເງິນ | The person who makes child support payments (NCP). **Laotian –** ບຸກຄົນຜູ້ທີ່ທຳການຈ່າຍເງິນລ້ຽງລູກ **(NCP).** |
| **Payment Services Only**<br>*n.* | PSO | ການບໍຣິການຈ່າຍເງິນເທົ່ານັ້ນ | The phrase used to show that DCS is processing child support payments but is not enforcing an order to collect child support. **Laotian –** ຖ້ອຍຄຳທີ່ຖືກໃຊ້ເພື່ອຈະສະແດງໃຫ້ເຫັນວ່າພະແນກ **DCS** ກຳລັງດຳເນີນການໃນເງິນຈ່າຍຄ່າລ້ຽງລູກແຕ່ວ່າບໍ່ໄດ້ບັງຄັບໃຊ້ຄຳສັ່ງໃຫ້ເກັບເອົາເງິນລ້ຽງລູກ. |
| **Payment**<br>*n.* | PMT | ການຈ່າຍເງິນ | Money or other assets paid on account. **Laotian –** ເງິນ ຫລື ຊັບສົມບັດແນວອື່ນທີ່ຖືກຈ່າຍອອກໄປໃສ່ບັນຊີ. |

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Payroll Deduction Notice** *n.* | PDN | ໃບແຈ້ງການຫັກເງິນ ອອກຈາກບັນຊີເບີກເງິນ | A DCS letter that explains state and federal child support law and tells an employer to take money from an employee's pay for child support. **Laotian –** ໜັງສືຂອງພະແນກ **DCS** ຊຶ່ງອະທິບາຍກົດໝາຍເງິນລ້ຽງລູກຂອງຂອງຣັດ ແລະ ຣັຖບານກາງ ແລະ ບອກໃຫ້ນາຍຈ້າງທີ່ຈະເອົາເງິນຈາກເຊັກເງິນຂອງພະນັກງານສຳລັບເງິນລ້ຽງລູກ. |
| **Per Month Per Child** *adj.* | PMPC | ຕໍ່ເດືອນຕໍ່ເດັກຄົນນຶ່ງ | This phrase refers to the amount of money that is paid each month for each child. **Laotian –** ສຳນວນອັນນີ້ໝາຍເຖິງຈຳນວນເງິນທີ່ຖືກຈ່າຍອອກແຕ່ລະເດືອນສຳລັບເດັກແຕ່ລະຄົນ. |
| **Personal Service** *n.* | PS | ການບໍຣິການສ່ວນຕົວ | This is a process of either using U.S. Postal Service certified restricted delivery mail or a company or sheriff to deliver legal notices to noncustodial parents regarding child support obligations. **Laotian –** ອັນນີ້ແມ່ນການດຳເນີນການບໍ່ວ່າຈະແມ່ນການໃຊ້ການສົ່ງໜັງສືໄປສະນີທີ່ຖືກປັ້ງປືນຈຳກັດຂອງກົມໄປສະນີ **US Postal Service** ຫລື ບໍຣິສັດ ຫລື ເຈົ້າໜ້າທີ່ຕຳຣວດເພື່ອຈະສົ່ງໃບແຈ້ງການທາງກົດໝາຍໃຫ້ພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງກ່ຽວກັບຄວາມຮັບຜິດຊອບໃນເງິນລ້ຽງລູກ. |
| **Physical Custodian** *n.* | | ຜູ້ປົກຄອງຮ່າງກາຍ | A person who has physical custody of a child who can also be the custodial parent (CP). **Laotian –** ບຸກຄົນຜູ້ທີ່ມີການຄຸ້ມຄອງຮ່າງກາຍຂອງເດັກນ້ອຍຜູ້ທີ່ສາມາດເປັນພໍ່ແມ່ຜູ້ປົກຄອງຮ່າງກາຍໄດ້ອີກຄືກັນ **(CP).** |
| **Plan Administrator** *n.* | | ຜູ້ບໍຣິຫານປົກຄອງແຜນການ | A person or entity designated to manage a health care plan. **Laotian –** ບຸກຄົນ ຫລື ບ່ອນໃດບ່ອນນຶ່ງທີ່ຖືກແຕ່ງຕັ້ງໃຫ້ຈັດການຄວບຄຸມໂຄງການ<br>ປິ່ນປົວສຸຂະພາບ. |
| **Plus** *prep.* | + | ບວກກັບ | Added to. Increased by. **Laotian –** ເພີ້ມໃສ່. ເພີ້ມຂື້ນໂດຍ. |
| **Policy** *n.* | POL | ນະໂຍບາຍ | The procedures and processes based on state and federal laws and regulations written by DCS stating how paternity establishment, medical enforcement and other child support related programs are administered.<br>**Laotian –** ຣະບຽບ ແລະ ວິທີການທີ່ຖືກອີງໃສ່ກົດໝາຍ ແລະ ກົດບັງຄັບຂອງຣັດ ແລະ ຂອງຣັຖບານກາງທີ່ຖືກຂຽນໄວ້ໂດຍພະແນກ **DCS** ຊຶ່ງກ່າວວ່າການກໍ່ຕັ້ງສາຍເລືອດພໍ່ລູກໄດ້ຖືກເຣັດຖືກເຣັດຂື້ນມາແນວໃດ, ການບັງຄັບໃຊ້ບັດພະຍາບານ ແລະ ໂຄງການທີ່ກ່ຽວຂ້ອງນຳເງິນລ້ຽງລູກແນວອື່ນ. |
| **Post Office** *n.* | PO | ຫ້ອງການໄປສະນີ | The U.S. Postal Service. **Laotian –** ພະແນກໄປສະນີຂອງ **U.S. Postal Service.** |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Prehearing Conference**<br>*n.* | | ການປະຊຸມກ່ອນການຟັງເຣື່ອງ | An official proceeding scheduled and conducted by an ALJ in preparation for a hearing. **Laotian –** ການດຳເນີນການທາງການທີ່ຖືກໝາຍນັດ ແລະ ດຳເນີນການໂດຍ **ALJ** ຄົນນຶ່ງໃນການຕຽມພ້ອມສຳລັບການຟັງເຣື່ອງ. |
| **Prehearing meeting**<br>*n.* | | ການພົບກັນກ່ອນການຟັງເຣື່ອງ | An informal voluntary meeting held before a prehearing conference or hearing. **Laotian –** ການພົບກັນຕາມສະມັກໃຈທີ່ບໍ່ເປັນທາງການຊຶ່ງໄດ້ຖືກຈັດຂຶ້ນກ່ອນການປະຊຸມກ່ອນການຟັງເຣື່ອງ ຫລື ການຟັງເຣື່ອງ. |
| **Prepaid support**<br>*n.* | | ເງິນລ້ຽງລູກທີ່ຖືກຈ່າຍລ່ວງໜ້າ | A payment made voluntarily to pay future support on a case when no current support or arrears are due. **Laotian –** ການຈ່າຍເງິນທີ່ຖືກເຮັດຕາມສະມັກໃຈເພື່ອຈະຈ່າຍເງິນລ້ຽງລູກໃນອະນາຄົດໃສ່ໃນສຳນວນຄະດີເມື່ອເວລາບໍ່ມີເງິນລ້ຽງລູກປັດຈຸບັນ ຫລື ກາຍຜ່ານມາທີ່ຕ້ອງຈ່າຍຄຽວນີ້. |
| **Presumed Father**<br>*n.* | | ພໍ່ຜູ້ທີ່ເຊື່ອວ່າເປັນພໍ່ | A man who is recognized as the father of a child until a judicial proceeding rebuts or confirms paternity. **Laotian –** ຜູ້ຊາຍຜູ້ທີ່ຖືກຮັບຮູ້ວ່າເປັນພໍ່ຂອງເດັກນ້ອຍຈົນກວ່າການດຳເນີນການທາງສານຈະປະຕິເສດ ຫລື ຢືນຢັນສາຍເລືອດພໍ່ລູກ. |
| **Primary language**<br>*n.* | | ພາສາຕົ້ນຕໍ | A DSHS customer's preferred language for conducting business. **Laotian –** ພາສາທີ່ມັກໃຊ້ກັນຫລາຍຂອງລູກຄ້າຂອງກົມ **DSHS** ສຳລັບການດຳເນີນວຽກງານ. |
| **Prison**<br>*n.* | | ຄຸກ | A place for confining people awaiting trial or for punishment after trial and conviction. **Laotian –** ສະຖານທີ່ສຳລັບການຄຸມຂັງບຸກຄົນລໍຖ້າການຂຶ້ນສານ ຫລື ການລົງໂທດຫລັງຈາກການຂຶ້ນສານ ຫລື ການຕັດສິນ. |
| **Probate**<br>*n.* | | ໃບພິນັຍກັມ | A court procedure to decide the distribution of a deceased person's assets. **Laotian –** ຣະບຽບການທາງສານເພື່ອຈະຕັດສິນການແຈກຢາຍຊັບສິນບັດຂອງບຸກຄົນຜູ້ທີ່ເສັຽຊີວິດໄປແລ້ວ. |
| **Pro Se**<br>*v.* | | ໂປຣ  ເຊ | A Latin term used to show that a person is representing him or herself in a legal action. **Laotian –** ຖ້ອຍຄຳພາສາລາຕິນທີ່ຖືກໃຊ້ເພື່ອຈະສະແດງວ່າບຸກຄົນນັ້ນຈະເປັນຕົວແທນຂອງເຂົາເຈົ້າເອງໃນການກະທຳທາງກົດໝາຍ. |
| **Prosecution, Prosecutor, Prosecuting Attorney**<br>*n.* | PROS | ການພິພາກສາ, ຜູ້ພິພາກສາ, ທະນາຍຄວາມ ຜູ້ພິພາກສາ | A county-based attorney who represents DCS in legal proceedings. **Laotian –** ທະນາຍຄວາມຢູ່ໃນເທສບານຜູ້ທີ່ເປັນຕົວແທນໃຫ້ພະແນກ **DCS** ໃນການດຳເນີນການທາງກົດໝາຍ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Protection Order**<br>*n.* | | ຄຳສັ່ງປ້ອງກັນ | A court order preventing one person from contacting or coming in contact with another often because of physical abuse. **Laotian –** ຄຳສັ່ງຂອງສານປ້ອງກັນຄົນນຶ່ງຈາກການຕິດຕໍ່ ຫລື ການໄປຫາພົວພັນນຳອີກຄົນນຶ່ງສ່ວນຫລາຍແລ້ວແມ່ນຍ້ອນການກໍ່ຄວາມຮຸນແຮງທາງຮ່າງກາຍ. |
| **Public Assistance**<br>*n.* | PA | ການຊ່ວຍເຫລືອສາທາຣະນະ | Government-funded programs that serve persons in need like Basic Food assistance and cash grants. **Laotian –** ໂຄງການທີ່ໄດ້ເງິນທຶນມາຈາກຣັຖບານຊຶ່ງຮັບໃຊ້ບຸກຄົນທີ່ຕ້ອງການເຊັ່ນວ່າການຊ່ວຍເຫລືອອາຫານຈຳເປັນ, ແລະ ເງິນອຸດຊ່ວຍເຫລືອ. |
| **Public Disclosure Coordinator**<br>*n.* | PDC | ຜູ້ປະສານງານການເປີດເຜີຍໃຫ້ສາທາຣະນະ | DCS staff authorized to make public disclosure decisions. **Laotian –** ພະນັກງານຂອງພະແນກ **DCS** ທີ່ຖືກອະນຸຍາດໃຫ້ທຳການຕັດສິນໃຈໃນການເປີດເຜີຍລາຍລະອຽດໃຫ້ສາທາຣະນະ. |
| **Qualified Child**<br>*n.* | | ເດັກນ້ອຍຜູ້ທີ່ມີສິດ | A minor child who is disabled and eligible for child support. **Laotian –** ເດັກນ້ອຍຕ່ຳກວ່າກະສຽນຜູ້ທີ່ເສັຽອົງຄະ ແລະ ມີສິດໄດ້ຮັບເງິນລ້ຽງລູກ. |
| **Qualified Domestic Relations Order**<br>*n.* | QDRO | ຄຳສັ່ງກ່ຽວພັນນຳຄົນໃນເຮືອນທີ່ມີເງື່ອນໄຂ | A court order that allows the ERISA plan administrator to make benefit payments to someone other than the retiree. **Laotian –** ຄຳສັ່ງຂອງສານທີ່ອະນຸຍາດໃຫ້ຜູ້ບໍຣິຫານໂຄງການ **ERISA** ທີ່ຈະທຳການຈ່າຍເງິນສວັດດີການໃຫ້ຄົນໃດຄົນນຶ່ງນອກຈາກຜູ້ກິນເບັ້ຽບຳນານ. |
| **Qualified Medical Child Support Order**<br>*n.* | | ຄຳສັ່ງອູ້ມຊູລ້ຽງລູກດ້ານພະຍາບານທີ່ມີເງື່ອນໄຂ | A medical child support order that contains the name and last known mailing address of the NCP and other children, or the name and mailing address of a state or local official as the child's mailing address and a description of the type and time designate. **Laotian –** ຄຳສັ່ງອູ້ມຊູລ້ຽງລູກດ້ານພະຍາບານທີ່ບັນຈຸຊື່ ແລະ ທີ່ຢູ່ໄປສະນີທີ່ຮູ້ຈັກສຸດທ້າຍຫນູ່ຂອງ **NCP** ແລະ ລູກຄົນອື່ນ, ຫລື ຊື່ແລະ ທີ່ຢູ່ໄປສະນີຂອງເຈົ້າຫນ້າທີ່ຂອງຣັດ ຫລື ທ້ອງຖິ່ນຊຶ່ງເປັນທີ່ຢູ່ໄປສະນີຂອງເດັກນ້ອຍ ແລະ ການບັນຣະຍາຍຂອງຊະນິດ ແລະ ການແຕ່ງຕັ້ງເວລາ. |
| **Question**<br>*v.* | ? | ຄຳຖາມ | To ask for information. **Laotian –** ທີ່ຈະຖາມເອົາຣາຍລະອຽດ. |
| **Reasonable efforts to locate**<br>*v.* | | ຄວາມພະຍາຍາມເຫມາະສົມທີ່ຈະຊອກຫາຕົວ | DCS action taken to find noncustodial parents. **Laotian –** ການກະທຳຂອງພະແນກ **DCS** ທີ່ໄດ້ຖືກເຮັດເພື່ອຈະຊອກຫາພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Receivable**<br>*n.* | | ເງິນຮັບເອົາທີ່ຍັງຕິດຢູ່ | A term used to describe a debt created when DCS has to remove a payment from a case that was sent to a payee or other state because the payer's check was not honored by the bank. **Laotian –** ຖ້ອຍຄຳທີ່ຖືກໃຊ້ເພື່ອຈະບັນຣະຍາຍໜີ້ທີ່ຖືກໄດ້ເກີດຂຶ້ນເມື່ອ ພະແນກ **DCS** ຕ້ອງໄດ້ເອົາການຈ່າຍເງິນອອກຈາກສຳນວນເອກສານຊຶ່ງຖືກສົ່ງໄປຫາຜູ້ອອກ ຊື່ຈ່າຍໃຫ້ ຫລື ຣັດອື່ນຍ້ອນວ່າເຊັກຂອງຜູ້ຈ່າຍເງິນບໍ່ໄດ້ຖືກຮັບຈ່າຍເງິນໃຫ້ໂດຍທະນາຄານ. |
| **Receive, Received**<br>*v.* | RECD | ຮັບເອົາ, ໄດ້ຮັບເອົາແລ້ວ | The act of taking in or getting something. **Laotian –** ການກະທຳຂອງການເອົາເຂົ້າມາ ຫລື ການເອົາສິ່ງໃດສິ່ງນຶ່ງ. |
| **Receipt**<br>*n.* | REC | ໃບລັບ | A document that shows or proves something was delivered or received. Sometimes it requires a signature like a certified restricted delivery letter. **Laotian –** ເອກສານທີ່ສະແດງໃຫ້ເຫັນ ຫລື ພິສູດວ່າສິ່ງໃດສິ່ງນຶ່ງໄດ້ຖືກສົ່ງໃຫ້ແລ້ວ ຫລື ໄດ້ຖືກຮັບເອົາ. ບາງເທື່ອມັນຕ້ອງໃຫ້ມີລາຍເຊັນເຊັ່ນວ່າໜັງສືການສົ່ງປັ້ງປືນຈຳກັດ. |
| **Reciprocal**<br>*v.* | RECIP | ປ້ອນເຖິງຊຶ່ງກັນ ແລະ ກັນ | Refers to two sides (like two states or two countries or a state and a country) and the documents and data which are kept on a case by DCS. **Laotian –** ອ້າງອີງເຖິງສອງຝ່າຍ (ເຊັ່ນວ່າສອງຣັດ ຫລື ສອງປະເທດຫລື ຣັດນຶ່ງ ແລະ ປະເທດນຶ່ງ) ແລະ ເອກສານ ຫລື ຂໍ້ມູນ ຊຶ່ງຖືກເກັບຮັກສາໄວ້ໃນສຳນວນເອກສານໂດຍ **DCS**. |
| **Record**<br>*n.* | REC | ບັນທຶກ | Information pertaining to the case and the receipt of documents, as well as all relevant facts, dates, actions taken, contacts made, and the results in a case. **Laotian –** ຣາຍຣະອຽດທີ່ເວົ້າກັນກັບສຳນວນເອກສານ ແລະ ການຮັບເອົາເອກສານ, ລວມທັງຄວາມຈິງທີ່ກ່ຽວຂ້ອງນຳທຸກໆຢ່າງ,ວັນທີ, ການກະທຳທີ່ຖືກເຮັດລົງໄປ, ການຕິດຕໍ່ ທີ່ຖືກເຮັດ, ແລະ ຜົນອອກມາໃນສຳນວນເອກສານ. |
| **Referral, Reference,**<br>*n.* | REF | ການສົ່ງຕໍ່, ການອີງໃສ່ | A packet of forms completed by a CP when receiving public assistance. The packet is sent to DCS to set up a child support case. **Laotian –** ຊຸດຟອມທີ່ຖືກຂຽນປະກອບໂດຍ **CP** ເມື່ອກຳລັງໄດ້ຮັບເງິນຊ່ວຍເຫລືອສາທາຣະນະຢູ່. ຟອມຊຸດນີ້ໄດ້ຖືກສົ່ງໄປຫາພະແນກ **DCS** ເພື່ອຈະກໍ່ຕັ້ງສຳນວນເອກສານເງິນລ້ຽງລູກຂຶ້ນ. |
| **Refund, Refunding**<br>*n.* | | ເງິນສົ່ງຄືນ, ການສົ່ງເງິນຄືນ | Money that is returned to a payer. **Laotian –** ເງິນທີ່ຖືກສົ່ງກັບ ຄືນໄປຫາຜູ້ຈ່າຍເງິນ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Register**<br>*v. n.* | | ຈົດຊື່ລົງທະບຽນ | To record or file a child support order or judgment determining parentage. **Laotian –** ທີ່ຈະບັນທຶກ ຫລື ຍື່ນຄຳສັ່ງຈ່າຍເງິນລ້ຽງລູກ ຫລື ຄຳຕັດສິນທີ່ບົ່ງບອກການລ້ຽງລູກ. |
| **Registered agent**<br>*n.* | | ຕົວແທນທີ່ຖືກຈົດຊື່ລົງທະບຽນ | For DCS purposes, a Washington state business legally registered to act for an out-of-state business. **Laotian –** ສຳລັບຈຸດປະສົງຂອງພະແນກ **DCS**, ກິຈການຄ້າຂອງຣັດວໍຊິງຕັນທີ່ໄດ້ຈົດຊື່ລົງທະບຽນຖືກຕ້ອງຕາມກົດຫມາຍທີ່ຈະປະຕິບັດກິຈການຄ້າຢູ່ນອກຣັດ. |
| **Registration of court orders**<br>*v.* | | ການຈົດຊື່ລົງທະບຽນຂອງຄຳສັ່ງຂອງສານ | Filing a court order in another state's court system allowing enforcement of the order in the other state. **Laotian –** ການຍື່ນຄຳສັ່ງຂອງສານຢູ່ໃນຣະບົບສານຂອງຣັດອື່ນອະນຸຍາດໃຫ້ມີການບັງຄັບໃຊ້ຄຳສັ່ງຢູ່ໃນຣັດອື່ນ. |
| **Registering tribunal**<br>*n.* | | ສານຍຸຕິທັມບ່ອນລົງທະບຽນ | The court where the child support order is registered. **Laotian –** ສານບ່ອນທີ່ຄຳສັ່ງຈ່າຍເງິນລ້ຽງລູກໄດ້ຖືກລົງທະບຽນ. |
| **Reimburse, Reimbursement**<br>*v.* | REIMB | ຈ່າຍເງິນຄືນ, ການຈ່າຍເງິນຄືນ | To pay back for money spent. **Laotian –** ທີ່ຈະຈ່າຍຄືນສຳລັບເງິນທີ່ຖືກຈ່າຍອອກໄປ. |
| **Relative**<br>*n.* | REL | ຍາດພີ່ນ້ອງ | Kinship, a blood relative like an aunt, uncle, grandparent. **Laotian –** ການເປັນຍາດກັນ, ພີ່ນ້ອງສາຍເລືອດດຽວກັນເຊັ່ນວ່າປ້າ, ລູງ, ພໍ່ເຖົ້າແມ່ເຖົ້າ. |
| **Relative Placement**<br>*n.* | | ການຈັດໃຫ້ຢູ່ນຳຍາດພີ່ນ້ອງ | This occurs when a child is placed in the home of a relative. **Laotian –** ອັນນີ້ເກີດຂື້ນເມື່ອເດັກນ້ອຍໄດ້ຖືກຈັດໃສ່ໃຫ້ຢູ່ໃນເຮືອນຂອງຍາດພີ່ນ້ອງ. |
| **Relinquish**<br>*v.* | | ຍອມຈຳນົນ | The voluntary surrender of custody of a child to a department, agency or prospective adoptive parents. **Laotian –** ການຍອມຈຳນົນຕາມສະມັກໃຈໃນຄວາມຄຸ້ມຄອງຂອງເດັກນ້ອຍໃຫ້ກົມ, ຫ້ອງການ ຫລື ພໍ່ລ້ຽງແມ່ລ້ຽງທີ່ຄາດຫມາຍໄວ້. |
| **Report**<br>*v.* | RPT | ລາຍງານ | To relate or tell about orally or in writing. **Laotian –** ທີ່ຈະສົ່ງຂ່າວ ຫລື ບອກໃຫ້ຮູ້ທາງປາກເປົ່າ ຫລື ທາງຫນັງສື. |
| **Representative**<br>*n.* | REP | ຜູ້ຕາງຫນ້າ | A delegate or agent for another person. **Laotian –** ຜູ້ແທນ ຫລືຕົວແທນສຳລັບຄົນອື່ນ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Residence, Resides** *n.* | RES | ບ່ອນຢູ່ອາສັຍ, ອາສັຍຢູ່ | To live in a place. **Laotian –** ທີ່ຈະຢູ່ບ່ອນນຶ່ງ.. |
| **Residential Care** *n.* | | ການເບິ່ງແຍງດູແລ ຢູ່ຕາມເຮືອນ | Foster care, either state or federally funded. **Laotian –** ການລ້ຽງເດັກກຳພ້າ, ບໍ່ວ່າຈະໄດ້ເງິນທຶນມາຈາກຣັດ ຫລື ຣັຖບານກາງ. |
| **Residential Custodian** *n.* | | ຜູ້ປົກຄອງຢູ່ເຮືອນ | An adult who lives with the child. Also called physical custodian or custodial parent (CP). **Laotian –** ຜູ້ໃຫຍ່ຜູ້ອາສັຍຢູ່ນຳເດັກນ້ອຍ. ຍັງຖືກເອີ້ນອີກວ່າແມ່ນຜູ້ປົກຄອງຮ່າງກາຍ ຫລື ພໍ່ແມ່ຜູ້ມີຄວາມຄຸ້ມຄອງ **(CP)**. |
| **Residential Parent** *n.* | | ພໍ່ແມ່ຢູ່ເຮືອນ | The parent the child lives with the majority of the time or custodial parent (CP). **Laotian –** ພໍ່ແມ່ຜູ້ອາສັຍຢູ່ນຳເດັກນ້ອຍໃນສ່ວນໃຫຍ່ຂອງເວລາ ຫລືພໍ່ແມ່ຜູ້ມີຄວາມຄຸ້ມຄອງ **(CP)**. |
| **Respond Responding, Responsible** *v.* | RESP | ຕອບມາ, ກຳລັງຕອບມາ, ຮັບຜິດຊອບ | To reply or answer. **Laotian –** ທີ່ຈະໃຫ້ຄຳຕອບ ຫລື ຕອບມາ. |
| **Responding Jurisdiction** *n.* | RJ | ອຳນາດສານຕອບມາ | The state or jurisdiction acting on behalf of another state to enforce child support. **Laotian –** ຣັດ ຫລື ອຳນາດສານທີ່ປະຕິບັດໜ້າທີ່ໃນນາມຂອງຣັດອື່ນເພື່ອຈະບັງຄັບໃຫ້ເກັບເອົາເງິນລ້ຽງລູກ. |
| **Responding State** *n.* | RS | ຣັດທີ່ຕອບມາ | The state action for another state enforcing child support. **Laotian –** ການກະທຳຂອງຣັດສຳລັບຣັດອື່ນ ບັງຄັບໃຫ້ເກັບເອົາເງິນລ້ຽງລູກ. |
| **Responsible Parent** *n.* | | ພໍ່ແມ່ຜູ້ຮັບຜິດຊອບ | The parent who pays child support also called the non-custodial parent (NCP). **Laotian –** ພໍ່ແມ່ຜູ້ຈ່າຍເງິນລ້ຽງລູກຍັງຖືກເອີ້ນອີກຄືກັນວ່າເປັນພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ **(NCP)**. |
| **Restricted** *v.* | RES | ຈຳກັດ | Limited. **Laotian –** ຈຳກັດ. |
| **Retained Support** *n.* | | ເງິນລ້ຽງລູກທີ່ຖືກກັກໄວ້ | A debt owed to DCS by anyone other than the NCP. **Laotian –** ໜີ້ທີ່ຍັງຕິດພະແນກ **DCS** ຢູ່ໂດຍຄົນໃດຄົນນຶ່ງນອກຈາກ **NCP**. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Return Receipt** *n.* | RR | ໃບລັບສິ່ງຄືນ | DCS uses this term to refer to post office documents showing an NCP signature and proving the NCP received a specific notice. **Laotian –** ພະແນກ **DCS** ໃຊ້ຖ້ອຍຄຳນີ້ເພື່ອຈະອ້າງອີງເຖິງເອກສານຂອງກົມໄປສະນີສະແດງໃຫ້ເຫັນລາຍເຊັນຂອງ **NCP** ແລະ ພິສູດວ່າ **NCP** ໄດ້ຮັບໃບ ແຈ້ງການໃບເຈາະຈົງແລ້ວ. |
| **Review** *v.* | REV | ກວດເບິ່ງຄືນ | To study or examine. DCS reviews information to see if child support can be changed or modified. **Laotian –** ເພື່ອຈະສຶກສາ ຫລື ກວດເບິ່ງ. ພະແນກ **DCS** ກວດເບິ່ງຣາຍລະອຽດຄືນເພື່ອຈະເບິ່ງວ່າເງິນລ້ຽງລູກສາມາດຖືກປ່ຽນແປງ ຫລື ດັດແປງໄດ້ ຫລື ບໍ່. |
| **Revised Code of Washington** *n.* | RCW | ກົດຫມາຍດັດແປງຂອງຣັດວໍຊິງຕັນ | Washington state laws (statutes). **Laotian –** ກົດຫມາຍ (ກົດບັນຍັດ) ຂອງຣັດວໍຊິງຕັນ. |
| **Rule** *n.* | | ກົດຣະບຽບ | A state regulation. Rules are found in the Washington Administrative Code (WAC). **Laotian –** ກົດເກນບັງຄັບຂອງຣັດ. ກົດຣະບຽບຈະຖືກພົບເຫັນຢູ່ໃນ ກົດ ຫມາຍປົກຄອງຣັດວໍຊິງຕັນ **(WAC)**. |
| **Satisfaction of Judgment** *n.* | | ການພໍໃຈໃນຄຳຕັດສິນ | Payment in full of a court-ordered child support obligation or a determination that the debt is no longer enforceable. **Laotian –** ການຈ່າຍເງິນເຕັມຂອງຄວາມຮັບຜິດຊອບໃນເງິນລ້ຽງລູກທີ່ຖືກສັ່ງອອກມາໂດຍສານ ຫລື ການເຫັນພ້ອມແນ່ນອນວ່າຫນີ້ອັນນີ້ບໍ່ສາມາດຖືກບັງຄັບໃຫ້ເກັບເອົາເງິນໄດ້ຕໍ່ໄປໄດ້ອີກ. |
| **Separate, Separation** *v.* | SEP | ແຍກທາງ, ການແຍກອອກຈາກກັນ | To part. To stop living together as husband and wife. **Laotian –** ທີ່ຈະແຍກອອກໄປ. ທີ່ຈະຢຸດຢູ່ນຳກັນໃນຖານະເປັນຜົວ ແລະ ເມັຽກັນ. |
| **Service** *v.* | | ສົ່ງໃຫ້ເຖິງມື | The act of delivering a court order or other legal papers. **Laotian –** ການກະທຳຂອງການສົ່ງໃບຄຳສັ່ງຈາກສານ ຫລື ເຈັ້ຽກົດຫມາຍອື່ນໆ. |
| **Services** *n.* | | ການບໍຣິການ | Work done for others. Doing work for the public for the good of children. **Laotian –** ວຽກເຮັດໃຫ້ສຳລັບຄົນອື່ນ. ການເຮັດວຽກສຳລັບສາທາຣະນະຊົນເພື່ອເປັນການດີສຳລັບເດັກນ້ອຍ. |
| **Signature** *n.* | SIG | ລາຍເຊັນ | A unique mark. The act of writing one's name. **Laotian –** ເຄື່ອງຫມາຍທີ່ບໍ່ມີອັນອື່ນຄື. ການກະທຳຂອງການຂຽນຊື່ຂອງຄົນນຶ່ງ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Silent Order**<br>*n.* | | ຄຳສັ່ງມິດງຽບ | A court order that does not mention child support. **Laotian –** ຄຳສັ່ງຈາກສານທີ່ບໍ່ໄດ້ກ່າວເຖິງເງິນລ້ຽງລູກ. |
| **Sixty-day rule**<br>*n.* | | ກົດຣະບຽບຫົກສິບວັນ | The legal time frame DCS is required to establish a public assistance case debt. **Laotian –** ຂອບເຂດເວລາຕາມກົດໝາຍທີ່ພະແນກ **DCS** ກຳນົດເພື່ອຈະກໍ່ຕັ້ງໜີ້ຂອງສຳນວນເງິນຊ່ວຍເຫລືອສາທາຣະນະ. |
| **Social Security Administration**<br>*n.* | SSA | ພະແນກປົກຄອງຄວາມປອດພັຍຂອງສັງຄົມ | The branch of the U.S. federal government that collects and distributes benefits to retirees and disabled persons. **Laotian –** ສາຂານຶ່ງຂອງຣັຖບານກາງ **US** ທີ່ເກັບເອົາ ແລະ ແຈກຢາຍເງິນສວັດດີການໃຫ້ແກ່ຜູ້ອອກກິນເບັ້ຽບຳນານ ແລະ ຄົນເສັຽອົງຄະ. |
| **Social Security Number**<br>*n.* | SSN | ເລກຄວາມປອດພັຍຂອງສັງຄົມ | The unique number assigned to U.S. citizens allowing them to take part in SSA benefits. **Laotian –** ເລກທີ່ບໍ່ຄືກັນກັບໃຜທີ່ຖືກແຕ່ງຕັ້ງໃຫ້ແກ່ຄົນສັນຊາດ **US**ອະນຸຍາດໃຫ້ເຂົາເຈົ້າທີ່ຈະມີສ່ວນເຂົ້າຮ່ວມໃນເງິນສວັດດີການ **SSA**. |
| **Spousal Support Order**<br>*n.* | | ຄຳສັ່ງອູ້ມຊູຄູ່ຜົວເມັຽ | A support order for a spouse or former spouse of the obligor (NCP). **Laotian –** ຄຳສັ່ງຈ່າຍເງິນລ້ຽງດູສຳລັບຜົວເມັຽ ຫລື ຜົວເມັຽຄົນກ່ອນຂອງຜູ້ຮັບຜິດຊອບຕ້ອງຈ່າຍ **(NCP)**. |
| **Standard Calculation**<br>*n.* | | ການຄິດໄລ່ຕາມມາຕຖານ | The amount of child support owed based on the Washington State Child Support Schedule. This amount does not include any other credits allowed for other children in the household or other reasons for deviation. **Laotian –** ຈຳນວນເງິນຂອງເງິນລ້ຽງລູກທີ່ຍັງຕິດໜີ້ຢູ່ໂດຍອີງຕາມຕາຕລາງເງິນລ້ຽງລູກຂອງຣັດວໍຊິງຕັນ. ເງິນຈຳນວນນີ້ບໍ່ໄດ້ລວມເອົາເງິນເຄຣດິດອື່ນໆແນວໃດແນວນຶ່ງທີ່ຖືກອະນຸຍາດໃຫ້ສຳລັບລູກຄົນອື່ນຢູ່ໃນຄອບຄົວ ຫລື ເຫດຜົນແນວອື່ນສຳລັບການແຕກຕ່າງຈາກທັມມະດາ. |
| **State Of Conception**<br>*n.* | SOC | ຣັດຂອງການຕັ້ງທ້ອງເປັນຕົວລູກນ້ອຍ | The state in the U.S. where a child is conceived. **Laotian –** ຣັດຢູ່ໃນ **US** ບ່ອນທີ່ລູກນ້ອຍໄດ້ເປັນຕົນເປັນໂຕຂື້ນມາ. |
| **State Office**<br>*n.* | SO | ຫ້ອງການຂອງຣັດ | The headquarters or an agency's central office. **Laotian –** ສຳນັກງານໃຫຍ່ ຫລື ຫ້ອງການສູນກາງຂອງອົງການ. |
| **State Parent Locator Service**<br>*n.* | SPLS | ພະແນກຊອກຫາພໍ່ແມ່ຂອງຣັດ | The centralized locate unit in an IV-D agency. The unit searches for noncustodial parents and their assets. **Laotian –** ໜ່ວຍຊອກຫາພໍ່ແມ່ຣວມສູນກາງຢູ່ໃນຫ້ອງການ **IV-D.**ໜ່ວຍນີ້ຈະຊອກຫາພໍ່ແມ່ຜູ້ບໍ່ມີຄວາມຄຸ້ມຄອງ ແລະ ຊັບສິນບັດຂອງເຂົາເຈົ້າ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Statement**<br>*n.* | STMT | ໃບແຈ້ງການ | A financial record showing the amount of money due (needed to be paid). **Laotian –** ບັນທຶກການເງິນທີ່ສະແດງໃຫ້ເຫັນຈຳນວນເງິນທີ່ບໍ່ທັນໄດ້ຈ່າຍເທື່ອ (ຕ້ອງໄດ້ຈ່າຍ). |
| **Statute Of Limitations**<br>*n.* | SOL | ກົດບັນຍັດຂອງຂອບເຂດເວລາ | The legal period of time DCS can collect a child support debt. **Laotian –** ຣະຍະເວລາຕາມກົດໝາຍທີ່ຜະແນກ **DCS** ສາມາດເກັບເອົາໜີ້ເງິນລ້ຽງລູກ. |
| **Stay**<br>*v.* | | ຢູ່ | To stop or halt or postpone a legal action. **Laotian –** ທີ່ຈະຢຸດ ຫລື ໂຈະ ຫລື ເລື່ອນການກະທຳຕາມກົດໝາຍ. |
| **Stipulated, Stipulation**<br>*v., n.* | STIP | ຖືກຕົກລົງກັນ, ການຕົກລົງກັນ | An agreement between the NCP, CP and DCS that there is a good cause (reason) for either late hearing or for vacating a default support order. **Laotian –** ການຕົກລົງເຫັນພ້ອມຣະຫວ່າງ **NCP, CP** ແລະ ຜະແນກ **DCS** ວ່າມັນມີສາເຫດທີ່ດີ (ເຫດຜົນ) ສຳລັບການຟັງເຣື່ອງຊ້າ ຫລື ສຳລັບການເລີກລົ້ມຄຳສັ່ງຈ່າຍເງິນລ້ຽງລູກທີ່ບໍ່ເຮັດຕາມໝາຍນັດ. |
| **Stored Value Card**<br>*n.* | | ບັດມີຣາຄາຕາມທີ່ຖືກເກັບໄວ້ໃຫ້ | A DCS Card or Visa Card. Child support payments are electronically put on the card instead of issuing checks for child support payments. **Laotian –** ບັດ **DCS Card** ຫລື ບັດ **Visa Card.** ການຈ່າຍເງິນລ້ຽງລູກໄດ້ຖືກສົ່ງເຂົ້າໃສ່ໃນບັດໂດຍທາງເອເລັກໂຕຣນິກແທນທີ່ວ່າຈະເບີກເຊັກອອກໃຫ້ສຳລັບການຈ່າຍເງິນລ້ຽງລູກ. |
| **Subro Only**<br>*n.* | | ຊູໂບຣເທົ່ານັ້ນ | A DCS case that does not enforce child support but collects money owed to Washington state. **Laotian –** ສຳນວນເອກສານຂອງຜະແນກ **DCS** ທີ່ບໍ່ບັງຄັບເກັບເງິນລ້ຽງລູກແຕ່ວ່າເກັບເອົາເງິນທີ່ຍັງຕິດໜີ້ຣັດວໍຊິງຕັນຢູ່. |
| **Subrogated Debt**<br>*n.* | SUBRO | ໜີ້ແທນໃຫ້ຄົນອື່ນ | The substitution of one person in place of another person in a legal claim. DCS sets up these cases to collect child support arrears debt assigned to DSHS. **Laotian –** ການເຮັດແທນຂອງຄົນນຶ່ງໃສ່ແທນບ່ອນຂອງອີກຄົນນຶ່ງຢູ່ໃນການທວງຕາມກົດໝາຍ. ຜະແນກ **DCS** ກໍ່ຕັ້ງສຳນວນເອກສານເຫລົ່ານີ້ເພື່ອຈະເກັບໜີ້ເງິນລ້ຽງລູກບໍ່ໄດ້ຈ່າຍກາຍຜ່ານມາທີ່ຖືກແຕ່ງຕັ້ງໃຫ້ແກ່ກົມ **DSHS**. |
| **Suggest/ Suggested**<br>*v.* | SUG | ແນະນຳຖືກແນະນຳ | To hint or refer to something indirectly. **Laotian –** ທີ່ຈະບອກແນວຄິດ ຫລື ອ້າງອີງເຖິງແນວໃດແນວນຶ່ງໂດຍທາງອ້ອມ. |
| **Sum-certain**<br>*n.* | | ຈຳນວນ-ແນ່ນອນ | A specific amount of money. **Laotian –** ຈຳນວນເງິນອັນເຈາະຈົງ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Superior Court**<br>*n.* | SUP | ສານສູງສຸດ | A court of general jurisdiction in the U.S., above municipal courts and below higher courts of appeal. **Laotian –** ສານຂອງອຳນາດສານທົ່ວໄປຢູ່ໃນ **U.S.**, ສູງກວ່າສານປະຈຳເທສບານ ແລະ ຕ່ຳກວ່າສານອຸທອນຂັ້ນສູງ. |
| **Supplemental Security Income**<br>*n.* | SSI | ຣາຍໄດ້ຄວາມປົດພັຍເພີ້ມເຕີມ | An SSA benefit program for persons who qualify. Often these persons have a physical or mental disability. **Laotian –** ໂຄງການຊ່ວຍເຫລືອເງິນ **SSA** ສຳລັບບຸກຄົນຜູ້ທີ່ມີສິດໄດ້ຮັບ. ສ່ວນຫລາຍແລ້ວບຸກຄົນເຫລົ່ານີ້ມີຄວາມເສັຽອົງຄະທາງຮ່າງກາຍ ຫລື ຈິດໃຈ. |
| **Support Debt**<br>*n.* | | ຫນີ້ເງິນລ້ຽງລູກ | The amount of past due child support owed on a case. Also called arrears. **Laotian –** ຈຳນວນເງິນຂອງເງິນລ້ຽງລູກທີ່ບໍ່ໄດ້ຈ່າຍກາຍຜ່ານມາທີ່ຍັງຕິດຫນີ້ຢູ່ໃນສຳນວນເອກສານ. ຍັງຖືກເອີ້ນອີກວ່າແມ່ນຫນີ້ບໍ່ໄດ້ຈ່າຍກາຍຜ່ານມາ. |
| **Support Enforcement Agency**<br>*n.* | | ຫ້ອງການບັງຄັບເກັບເງິນລ້ຽງລູກ | A state or public agency that enforces child support orders and laws (DCS). **Laotian –** ຫ້ອງການຂອງຣັດ ຫລື ສາທາຣະນະທີ່ບັງຄັບໃຊ້ຄຳສັ່ງຈ່າຍ ແລະ ກົດຫມາຍເງິນລ້ຽງລູກ **(DCS)**. |
| **Support Enforcement Management System**<br>*n.* | SEMS | ຣະບົບຄວບຄຸມກຳກັບນຳການບັງຄັບເກັບເງິນລ້ຽງລູກ | The computer system used to manage DCS cases. **Laotian –** ຣະບົບຄອມພິວເຕີທີ່ຖືກໃຊ້ເພື່ອຈະຄວບຄຸມສຳນວນເອກສານຂອງພະແນກ **DCS**. |
| **Support Enforcement Officer**<br>*n.* | SEO | ພະນັກງານບັງຄັບເກັບເງິນລ້ຽງລູກ | The DCS staff person assigned to managed and enforce child support cases. **Laotian –** ພະນັກງານຂອງພະແນກ **DCS** ທີ່ຖືກແຕ່ງຕັ້ງໃຫ້ກຳກັບຄວບຄຸມ ແລະ ບັງຄັບສຳນວນເອກສານເງິນລ້ຽງລູກ. |
| **Support Order**<br>*n.* | | ຄຳສັ່ງຈ່າຍເງິນລ້ຽງລູກ | A legal document establishing child support amounts either by court or administrative orders. **Laotian –** ເອກສານທາງກົດຫມາຍທີ່ກໍ່ຕັ້ງຈຳນວນເງິນລ້ຽງລູກບໍ່ວ່າໂດຍສານ ຫລື ຄຳສັ່ງຈາກອຳນາດການປົກຄອງ. |
| **Support Transfer Payment**<br>*n.* | | ເງິນສົ່ງຕໍ່ຄ່າລ້ຽງລູກ | The amount of money court or administrative orders require one parent to pay the other parent for child support. **Laotian –** ຈຳນວນເງິນທີ່ສານ ຫລື ຄຳສັ່ງຈາກອຳນາດການປົກຄອງບົ່ງໃຫ້ພໍ່ແມ່ຄົນນຶ່ງທີ່ຈະຈ່າຍໃຫ້ພໍ່ແມ່ອີກຄົນນຶ່ງສຳລັບເງິນລ້ຽງລູກ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Suspend, Suspense**<br>*n.* | SUSP | ໂຈະໄວ້, ການໂຈະໄວ້ | An account used to record payments temporarily when there is a question about how to apply a payment.<br>**Laotian –** ບັນຊີທີ່ຖືກໃຊ້ເພື່ອຈະບັນທຶກການຈ່າຍເງິນໂດຍຊົ່ວຄາວເມື່ອມັນມີຄຳຖາມກ່ຽວກັບວ່າຈະໃຊ້ເງິນຈ່າຍມາແນວໃດ. |
| **Swab**<br>*n.* | | ກວາດເອົາ | A small piece of cotton attached to the end of a stick used for collecting a sample of a man's saliva. The saliva is tested of DNA to determine paternity. **Laotian –** ບອງຝ້າຍອັນນ້ອຍໆທີ່ຕິດຢູ່ສົ້ນຂອງໄມ້ທີ່ຖືກໃຊ້ສຳລັບການເກັບເອົາຕົວຢ່າງຂອງນ້ຳລາຍຂອງຜູ້ຊາຍ. ນ້ຳລາຍໄດ້ຖືກກວດເບິ່ງ **DNA** ເພື່ອຈະຕັດສິນສາຍເລືອດພໍ່ລູກ. |
| **Telephone System for Deaf**<br>*n.* | TDD or TTY | ຣະບົບໂທຣະສັບສຳລັບຄົນຫູຫນວກ | A system that allows persons who cannot hear to communicate using a telephone. **Laotian –** ຣະບົບທີ່ອະນຸຍາດໃຫ້ບຸກຄົນຜູ້ທີ່ບໍ່ສາມາດໄດ້ຍິນທີ່ຈະຕິດຕໍ່ກັນໂດຍການໃຊ້ໂທຣະສັບ. |
| **Temporary, Temporarily**<br>*adv.* | TEMP | ຊົ່ວຄາວ, ໂດຍຊົ່ວຄາວ | In place for a short or limited time period. **Laotian –** ຢູ່ໃນສະຖານທີ່ສຳລັບຣະຍະເວລາອັນສັ້ນໆ ຫລື ຈຳກັດ. |
| **Temporary Assistance for Needy Families**<br>*n.* | TANF | ການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ | Money payments and care for dependent children and needy parents or a relative with whom they live.<br>**Laotian –** ການຈ່າຍເງິນ ແລະ ການເບິ່ງແຍງດູແລສຳລັບເດັກນ້ອຍຫວັງເພິ່ງ ແລະ ພໍ່ແມ່ ຫລື ພີ່ນ້ອງຜູ້ທີ່ຕ້ອງການເງິນທີ່ເຂົາເຈົ້າອາສັຍຢູ່ນຳ. |
| **Temporary Court Order**<br>*n.* | | ຄຳສັ່ງຈາກສານຊົ່ວຄາວ | A legal document entered pending the final court order.<br>**Laotian –** ເອກສານທາງກົດຫມາຍທີ່ຖືກສັ່ງອອກມາໃນຂະນະລໍຖ້າຄຳສັ່ງສຸດຂາດຈາກສານ. |
| **Temporary Parenting Plan**<br>*n.* | | ແຜນການລ້ຽງລູກຊົ່ວຄາວ | A short-term plan put into place until a divorce decree is final. These plans tell which parent will live with the children and how the children will be raised. **Laotian –** ແຜນການຣະຍະສັ້ນທີ່ຖືກເອົາອອກມາໃຊ້ຈົນກວ່າວ່າໃບຢ່າຮ້າງຈະເປັນສຸດຂາດ. ແຜນການອັນນີ້ຈະບອກວ່າພໍ່ແມ່ຄົນໃດຈະຢູ່ນຳລູກ ແລະ ລູກຈະຖືກລ້ຽງໃຫ້ໃຫຍ່ໄດ້ແນວໃດ. |
| **Termination**<br>*n.* | TERM | ການຕັດ | The act of stopping or ending. Termination of child support means child support payments stop. **Laotian –** ການກະທຳຂອງການຢຸດ ຫລື ຈົບລົງ. ການຕັດໃນເງິນລ້ຽງລູກຫມາຍເຖິງການຢຸດຈ່າຍເງິນລ້ຽງລູກ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Termination of Services**<br>*v.* | | ການປຸດການບໍຣິການ | Refers to when DCS closes and stops working on a child support case. **Laotian –** ອ້າງອີງເຖິງເມື່ອເວລາພະແນກ **DCS** ປິດ ຫລື ປຸດເຮັດວຽກໃນສຳນວນເອກສານເງິນລ້ຽງລູກ. |
| **Title IV-A**<br>*n.* | | ມາດຕຣາ IV-A | Refers to the Social Security Act under Title XX. **Laotian –** ອ້າງອີງເຖິງກົດຫມາຍຄວາມຫມັ້ນຄົງສັງຄົມ **(Social Security Act)** ພາຍໃຕ້ມາຕຣາ **XX.** |
| **Title IV-A Agency**<br>*n.* | | ຫ້ອງການຂອງມາດຕຣາ IV-A | The office in DSHS that manages the TANF program administering cash, medical and food assistance in Washington state. **Laotian –** ຫ້ອງການຢູ່ໃນກົມ **DSHS** ທີ່ກຳກັບນຳໂຄງການ **TANF** ຊຶ່ງຄວບຄຸມການຊ່ວຍເຫລືອເງິນ, ພະຍາບານ ແລະ ອາຫານ ຢູ່ໃນຣັດວໍຊິງຕັນ. |
| **Title IV-D Agency**<br>*n.* | | ຫ້ອງການຂອງມາດຕຣາ IV-D | DCS is the agency administering the federal child support program also called the Washington State Support Registry (WSSR). **Laotian –**ພະແນກ **DCS** ແມ່ນຫ້ອງການທີ່ຄວບຄຸມໂຄງການເງິນລ້ຽງລູກຂອງຣັຖບານກາງຊຶ່ງຍັງຖືກເອີ້ນອີກວ່າເປັນ ທະບຽນ ເງິນລ້ຽງລູກຂອງຣັດວໍຊິງຕັນ **(Washington State Support Registry (WSSR)).** |
| **Title IV-D case**<br>*n.* | | ສຳນວນຂອງມາດຕຣາ IV-D | A DCS case providing child support enforcement services. **Laotian –** ສຳນວນເອກສານຂອງພະແນກ **DCS** ຊຶ່ງເອົາການບໍຣິການບັງຄັບເງິນລ້ຽງລູກໃຫ້. |
| **Title IV-E case**<br>*n.* | | ສຳນວນຂອງມາດຕຣາ IV-E | A foster care case. **Laotian –** ສຳນວນເອກສານການລ້ຽງດູເດັກກຳພ້າ. |
| **Toll**<br>*n.* | | ປຸດກ່ອນ | A legal term meaning to stop temporarily. **Laotian –** ຖ້ອຍຄຳທາງກົດຫມາຍຊຶ່ງມີຄວາມຫມາຍວ່າຈະປຸດໄວ້ຊົ່ວຄາວ. |
| **Total obligation**<br>*n.* | | ການຮັບຜິດຊອບທັງຫມົດ | The entire child support amount ordered and owed on a case before deducting credits or applying payments. **Laotian –** ຈຳນວນເງິນລ້ຽງລູກທັງຫມົດທີ່ຖືກສັ່ງອອກມາ ຫລື ຍັງຕິດ ຫນີ້ຢູ່ໃນສຳນວນເອກສານກ່ອນການຫັກເອົາເຄຣດິດອອກ ຫລື ການຄິດໄລ່ເງິນຈ່າຍເຂົ້າໃສ່. |
| **Transfer**<br>*v.* | XFER | ໂອນ | To shift or move from one place to another. **Laotian –** ທີ່ຈະເຄື່ອນທີ່ ຫລື ຍ້າຍອອກຈາກບ່ອນນຶ່ງໄປຫາບ່ອນນຶ່ງ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Tribal Liaison** *n.* | TL | ການຕິດຕໍ່ປະສານງານນຳຊົນເຜົ່າ | A DCS employee who works cases with tribal affiliation. **Laotian –** ພະນັກງານຂອງພະແນກ **DCS** ຜູ້ທີ່ເຮັດວຽກນຳສຳນວນ ເອກສານທີ່ມີການພົວພັນນຳຊົນເຜົ່າ. |
| **Tribunal** *n.* | | ສານ | A state court, tribal court, administrative agency lawfully allowed to establish, enforce or modify child support orders or to determine parentage. **Laotian –** ສານຂອງຣັດ, ສານຂອງຊົນເຜົ່າ, ຫ້ອງການອຳນາດການປົກຄອງທີ່ຖືກອະນຸຍາດໃຫ້ກໍ່ຕັ້ງ, ບັງຄັບໃຊ້ ຫລື ດັດແປງຄຳສັ່ງ ຈ່າຍເງິນລ້ຽງລູກ ຫລື ເພື່ອຈະກໍ່ຕັ້ງການລ້ຽງລູກ. |
| **Unemployment Compensation** *n.* | UC | ເງິນວ່າງງານ | This refers to money paid by Washington's Employment Security Department to persons who qualify when they do not have a job. **Laotian –** ອັນນີ້ໝາຍເຖິງເງິນທີ່ຖືກຈ່າຍໂດຍກົມແຮງງານຂອງຣັດວໍຊິງຕັນໃຫ້ບຸກຄົນຜູ້ທີ່ມີເງື່ອນໄຂໄດ້ລັບເມື່ອເວລາເຂົາເຈົ້າບໍ່ມີວຽກເຮັດ. |
| **Uniform Interstate Family Support Act** *n.* | UIFSA | ກົດໝາຍອູ້ມຊູຄອບຄົວ ຣະຫວ່າງຣັດແບບດຽວກັນ | The law that sets a process for collection of interstate (other states) child support cases. **Laotian –** ກົດໝາຍທີ່ກໍ່ຕັ້ງການດຳເນີນງານສຳລັບການເກັບເອົາເງິນໃນສຳນວນເອກສານເງິນລ້ຽງລູກຣະຫວ່າງຣັດ (ຣັດອື່ນ). |
| **Unreimbursed Assistance** *n.* | | ເງິນຊ່ວຍເຫລືອທີ່ບໍ່ທັນຖືກຈ່າຍເງິນໃຫ້ຄືນເທື່ອ | The total amount of assigned public assistance (TANF) paid to a family that has not been paid or collected. **Laotian –** ຈຳນວນເງິນທັງໝົດຂອງເງິນຊ່ວຍເຫລືອສາທາຣະນະ**(TANF)** ທີ່ຖືກແຕ່ງຕັ້ງໃສ່ຊຶ່ງຖືກຈ່າຍໃຫ້ແກ່ຄອບຄົວຊຶ່ງວ່າບໍ່ທັນຖືກຈ່າຍໃຫ້ ຫລື ເກັບເອົາຄືນເທື່ອ. |
| **Vacate, Vacated** *v.* | VAC | ເລີກລົ້ມ, ຖືກເລກລົ້ມ | When a court or administrative agency cancels a child support order. **Laotian –** ເມື່ອເວລາສານ ຫລື ຫ້ອງການອຳນາດການປົກຄອງຍົກເລີກຄຳສັ່ງຈ່າຍເງິນລ້ຽງລູກ. |
| **Variable Order** *n.* | | ຄຳສັ່ງປ່ຽນແປງໄດ້ | A court order that sets ways to establish and change a monthly child support payment amount. **Laotian –** ຄຳສັ່ງຈາກສານທີ່ຕັ້ງຫົນທາງເພື່ອຈະກໍ່ຕັ້ງ ແລະ ປ່ຽນແປງຈຳນວນເງິນຂອງການຈ່າຍເງິນລ້ຽງລູກປະຈຳເດືອນ. |
| **Vehicle** *n.* | | ຍານພາຫະນະ | An automobile, car, truck or van. **Laotian –** ຣົດຍົນ, ຣົດ, ຣົດກະບະ, ຫລື ຣົດແວນ. |
| **Versus** *prep.* | VS | ຕໍ່ສູ້ກັບ | In a contest or court action one person against another or an alternative between two items. **Laotian –** ຢູ່ໃນການຄັດຄ້ານ ຫລື ການຟ້ອງຂຶ້ນສານຂອງຄົນນຶ່ງໃສ່ອີກ ຄົນນຶ່ງ ຫລື ການເລືອກເອົາອັນນຶ່ງຣະຫວ່າງສອງຢ່າງ. |

## Division of Child Support

# English-language Learner Glossary

### English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Veterans Administration** *n.* | VA | ພະແນກປົກຄອງນັກຣົບເກົ່າ | The federal department that administers military veteran benefits and services. **Laotian –** ກົມຂອງຣັຖບານກາງຊຶ່ງບໍຣິຫານຄວບຄຸມສວັດດີການແລະ ການບໍຣິການສຳລັບທະຫານນັກຣົບເກົ່າ. |
| **Victims Advocate** *n.* | | ຜູ້ຊ່ວຍເຫລືອຜູ້ເຄາະຮ້າຍ | A representative or defender who pleads or acts on another's behalf often in cases of family violence or abuse. **Laotian –** ຜູ້ຕາງຫນ້າ ຫລື ຜູ້ປ້ອງກັນຜູ້ທີ່ສູ້ຄະດີ ຫລື ສະແດງຕົວໃນ ນາມຂອງຄົນອື່ນ ສ່ວນຫລາຍແລ້ວແມ່ນຢູ່ໃນຄະດີຂອງການ ຜິດຖຽງກັນຮຸນແຮງຢູ່ໃນຄອບຄົວ ຫລືການກົດຂີ່ຂົ່ມເຫັງ. |
| **Visitation** *n.* | | ການຢ້ຽມຢາມ | A parent's right to visit a child or have a child as a visitor, as specified in divorce decrees and parenting plans. **Laotian –** ສິດທິຂອງພໍ່ແມ່ທີ່ຈະຢ້ຽມຢາມລູກ ຫລື ມີລູກເປັນຜູ້ມາຢ້ຽມຢາມ, ຕາມທີ່ຖືກເຈາະຈົງຢູ່ໃນໃບຢ່າຮ້າງ ແລະ ແຜນການລ້ຽງລູກ. |
| **Voluntary Payment,** *n.* **Voluntarily** *v.* | VOL | ການຈ່າຍເງິນຕາມສະມັກໃຈ, ຢ່າງສະມັກໃຈ | Making a payment on one's own free will, willingly. **Laotian –** ການທຳການຈ່າຍເງິນດ້ວຍຄວາມພໍໃຈຂອງຕົນເອງ, ໂດຍຍິນດີເຣັດ. |
| **Warrant** *n.* | WAR | ໃບສັ່ງຈ່າຍ | A legal voucher authorizing payment or receipt of money. Also, a judicial writ authorizing an officer to execute a judgment or make a search, seizure or arrest. **Laotian –** ໃບສັ່ງຈ່າຍຕາມກົດຫມາຍທີ່ອະນຸມັດການຈ່າຍເງິນ ຫລື ການຮັບເອົາເງິນ. ອີກແນວນຶ່ງ, ໃບຄຳສັ່ງຈາກສານອະນຸຍາດໃຫ້ເຈົ້າຫນ້າທີ່ທີ່ຈະອອກຄຳຕັດສິນ ຫລື ທຳການຊອກຫາ, ການຍຶດເອົາ ຫລື ການຈັບກຸມຕົວ. |
| **Washington Administrative Code** *n.* | WAC | ກົດຫມາຍປົກຄອງຂອງຣັດວໍຊິງຕັນ | The compiled rules and regulations adopted by state agencies to implement Washington state laws. **Laotian –** ກົດຣະບຽບ ແລະ ຂໍ້ບັງຄັບທີ່ຖືກໂຮມເຂົ້າກັນຊຶ່ງຖືກຮັບຮອງເອົາໂດຍຫ້ອງການຂອງຣັດເພື່ອຈະວາງໃຊ້ກົດຫມາຍຂອງຣັດວໍຊິງຕັນ. |
| **Washington State Child Support Schedule** *n.* | WSCSS | ຕາຕະລາງເງິນລ້ຽງລູກຂອງຣັດວໍຊິງຕັນ | The basic standard that must be used to set child support payment amounts in Washington state. **Laotian –** ມາຕຖານພື້ນຖານຊຶ່ງຕ້ອງໄດ້ຖືກໃຊ້ເພື່ອຈະກໍ່ຕັ້ງຈຳນວນເງິນລ້ຽງລູກຢູ່ໃນຣັດວໍຊິງຕັນ. |

# English-language Learner Glossary

## English / Laotian

| English | Abbreviation | Laotian | English / Laotian Definition |
|---|---|---|---|
| **Washington State Support Registry**<br>*n.* | WSSR | ທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ | DCS acting as WSSR receives and distributes child support payments. **Laotian –** ພະແນກ **DCS** ທຳໜ້າທີ່ເປັນ **WSSR** ຈະຮັບເອົາ ແລະແຈກຢາຍການຈ່າຍເງິນລ້ຽງລູກ. |
| **With Reference To**<br>*adj. ph.* | RE | ໂດຍການອີງໃສ່ | Connecting information to another source of information. **Laotian –** ການຕິດແທດຣາຍລະອຽດໄປໃສ່ແຫລ່ງມາຂອງຣາຍລະອຽດອີກບ່ອນນຶ່ງ. |
| **Withhold Withheld, Withholding**<br>n., v. | W/H | ກັກເອົາໄວ້, ຖືກກັກເອົາໄວ້, ການກັກເອົາໄວ້ | To deduct from an employee's pay like income tax. **Laotian –** ທີ່ຈະຫັກເອົາອອກຈາກການເບີກເງິນຂອງພະນັກງານເຊັ່ນວ່າພາສີຣາຍໄດ້. |
| **Without**<br>*adv.* | W/O | ປາສຈາກ | With something lacking or taken away. **Laotian –** ດ້ວຍສິ່ງໃດສິ່ງນຶ່ງທີ່ຂາດເຂີນ ຫລື ຖືກເອົາອອກໄປ. |
| **Work release**<br>*n.* | WK | ການປ່ອຍຕົວໃຫ້ເຮັດວຽກ | Status of an inmate who is allowed to work in the general population. **Laotian –** ສະພາບຂອງນັກໂທດຜູ້ທີ່ຖືກອະນຸຍາດໃຫ້ເຮັດວຽກຢູ່ໃນໝູ່ປະຊາຊົນທົ່ວໄປ. |
| **WSSR Language**<br>*n.* | | ພາສາ WSSR | Wording in a court or administrative order that directs the NCP to make child support payments to WSSR. **Laotian –** ຄຳເວົ້າຢູ່ໃນຄຳສັ່ງຈາກສານ ຫລື ອຳນາດການປົກຄອງທີ່ຊີ້ນຳໃຫ້ **NCP** ທຳການຈ່າຍເງິນລ້ຽງລູກໄປຫາ **WSSR.** |
| **WSSR order**<br>*n.* | | ຄຳສັ່ງ WSSR | A court or administrative child support order requiring payments to Washington State Support Registry. **Laotian –** ຄຳສັ່ງຈ່າຍເງິນລ້ຽງລູກຈາກສານ ຫລື ອຳນາດການປົກຄອງທີ່ບົ່ງໃຫ້ມີການຈ່າຍເງິນໄປຫາທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ. |
| **Year**<br>*n.* | YR | ປີ | The time period made up of 365 days. **Laotian –** ຣະຍະເວລາທີ່ປະກອບດ້ວຍ **365** ວັນ. |

Washington State
Department of Social
& Health Services

*Transforming lives*

Division of Child Support

DSHS 22-1187 LA (Rev. 1/17)